# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

24-31 ມັງກອນ 2024
ປີທີ 13
ສະບັບທີ 955
ລາຍສັບປະດາ


## ການນຳສະພາແຫ່ງຊາດ ອວຍພອນຄະນະນຳ ກະຊວງປ້ອງກັນປະເທດ ໂອກາດວັນສ້າງຕັ້ງກອງທັບ 75 ປີ



(ສພຊ) ເນື່ອງໃນໂອກາດວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 75 ປີ (20/01/1949-20/01/2024) ຕາງໜ້າຄະນະພັກ-ຄະນະນຳສະພາແຫ່ງຊາດ ນຳໂດຍສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານຄະນະປະຈຳສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຂົ້າອວຍພອນຄະນະພັກ-ຄະນະນຳ

ອ່ານຕໍ່ໜ້າ 4

## ສພຊ ປາຖະກະຖາວັນສຳຄັນຂອງຊາດ



(ສພຊ) ໃນຕອນເຊົ້າຂອງວັນພະຫັດທີ 18 ມັງກອນ 2024 ທີ່ສະພາແຫ່ງຊາດ ໄດ້ຈັດພິທີປາຖະກະຖາມູນເຊື້ອວັນສ້າງຕັ້ງກອງທັບປະຊາຊົນລາວ ຄົບຮອບ 75 ປີ (20/01/1949-20/01/2024) ແລະ ວັນເກີດປະທານ ຄຳໄຕ ສີພັນດອນ ຄົບຮອບ 100 ປີ (08/02/1924-08/02/2024) ເພື່ອທົບທວນຄືນມູນເຊື້ອແລະຜົນງານອັນໃຫຍ່ຫຼວງທີ່ກອງທັບ ແລະປະຊາຊົນລາວ ຍາດມາໄດ້ຕະຫຼອດໄລຍະ75ປີທີ່ຜ່ານມາ, ຖືເອົາໂອກາດນີ້ ເປັນການສຶກສາອົບຮົມສະມາຊິກພັກ,ພະນັກງານ-ລັດຖະກອນ ໃຫ້ຍົກສູງນ້ຳໃຈຮັກຊາດ, ເສີມຂະຫຍາຍຄວາມສາມັກຄີ, ສ້າງສະຕິເປັນເຈົ້າຕົນເອງ, ເປັນເຈົ້າການເຂົ້າຮ່ວມໃນການປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ

ອ່ານຕໍ່ໜ້າ 3

## ສະພາແຫ່ງຊາດ ສະຫຼຸບວຽກງານຂະບວນການແຂ່ງຂັນ ຮັກຊາດ ແລະ ພັດທະນາ ປີ 2023



(ສພຊ) ໃນຕອນບ່າຍວັນທີ 19 ມັງກອນ 2024 ທີ່ສະພາແຫ່ງຊາດ ໄດ້ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ປະຈຳປີ 2023 ແລະທິດທາງແຜນການປະຈຳປີ 2024 ແລະ ຈັດພິທີມອບໃບຍ້ອງຍໍປະຈຳປີ 2023 ໃຫ້ແກ່ພະນັກງານ-ລັດຖະກອນ

ອ່ານຕໍ່ໜ້າ 4

## ໄຊຍະບູລີ ສະເຫຼີມສະຫຼອງວັນສ້າງຕັ້ງກອງທັບ



ອ່ານຕໍ່ໜ້າ 12

## ກສຕສ ຕິດຕາມກວດກາວຽກງານຢູ່ ຄຳມ່ວນ ແລະ ສະຫວັນນະເຂດ



(ສພຊ) ໃນລະຫວ່າງວັນທີ 16-19 ມັງກອນ 2024 ທ່ານ ຮສ. ປອ. ລິນຄຳ ດວງສະຫວັນ ກຳມະການສຳຮອງສູນກາງພັກ, ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ (ກສຕສ) ພ້ອມດ້ວຍຄະນະ ໂດຍມີກົມຄຸ້ມຄອງບໍ່ແຮ່, ກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ລົງເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍແຮ່ທາດ ແລະ ມະຕິຂອງສະພາແຫ່ງຊາດ ກ່ຽວກັບໂຄງການຊຸກຍູ້ການຜະລິດທີ່ສຳຄັນແລະການຫຼຸດຜ່ອນການນຳເຂົ້າ ແລະ ທົດລອງຂຸດຄົ້ນແຮ່ທາດ ຢູ່ແຂວງຄຳມ່ວນ ແລະ ແຂວງສະຫວັນນະເຂດ.

ອ່ານຕໍ່ໜ້າ 4

## ຜົນສຳເລັດຂອງກອງປະຊຸມຄະນະເຮັດວຽກສະເພາະກິດໄອປາ (AIPA Tast Force Meeting)




(ສພຊ) ໃນລະຫວ່າງວັນທີ 17-18 ມັງກອນ 2024 ທີ່ນະຄອນຫຼວງຈາກາຕາ, ປະເທດອິນໂດເນເຊຍ; ກອງປະຊຸມຄະນະເຮັດວຽກສະເພາະກິດຂອງສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (ໄອປາ) ໄດ້ເປີດຂຶ້ນ ແລະ ດຳເນີນໄປ ພາຍໃຕ້ການເປັນປະທານຂອງທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ, ສະພາແຫ່ງຊາດ ແຫ່ງ ສປປ ລາວ.

ກອງປະຊຸມຈັດຂຶ້ນຕາມມະຕິຕົກລົງຂອງກອງປະຊຸມໃຫຍ່ໄອປາຄັ້ງທີ 44 ຜ່ານມາ ເຊິ່ງເຫັນດີໃຫ້ສ້າງຕັ້ງຄະນະເຮັດວຽກສະເພາະກິດຂຶ້ນ ເພື່ອລົງເລິກປຶກສາຫາລືກ່ຽວກັບການສ້າງຕັ້ງຫ້ອງສະໝຸດກົດໝາຍດີຈີຕອນຂອງໄອປາ ແລະ ການສ້າງຄູ່ມືກ່ຽວກັບການພົວພັນລະຫວ່າງໄອປາກັບຄູ່ຮ່ວມພາຍນອກ, ກ່ອນທີ່ຈະນຳເຂົ້າໄປພິຈາລະນາຮັບຮອງເອົາໃນກອງປະຊຸມໃຫຍ່ໄອປາຄັ້ງທີ 45 ທີ່ສະພາແຫ່ງຊາດລາວ ຈະເປັນເຈົ້າພາບຈັດຂຶ້ນໃນທ້າຍປີນີ້.

ເຂົ້າຮ່ວມກອງປະຊຸມຄັ້ງນີ້ ມີຄະນະຜູ້ແທນທີ່ຖືກແຕ່ງຕັ້ງເປັນຄະນະເຮັດວຽກສະເພາະກິດ ຈາກລັດຖະສະພາສະມາຊິກໄອປາ 9 ປະເທດ (ຂາດປະເທດມຽນມາ)ແລະກອງເລຂາໄອປາ ເຊິ່ງຕົວແທນສະພາແຫ່ງຊາດລາວແມ່ນທ່ານ ທັນຕາ ກອງຜາລີ ຮອງປະທານກຳມາທິການແຜນການ, ການເງິນ ແລະການກວດສອບ ເຂົ້າຮ່ວມ.

ໃນກອງປະຊຸມ, ຄະນະຜູ້ແທນໄດ້ສຸມໃສ່ຄົ້ນຄວ້າປະກອບຄຳຄິດຄຳເຫັນຕໍ່ສອງເອກະສານທີ່ສຳຄັນຄື: 1) ຮ່າງຄູ່ມືກ່ຽວ

ອ່ານຕໍ່ໜ້າ 4




ຖະແຫຼງຂ່າວຜົນສຳເລັດ... (ໜ້າ 6)



ກອງປະຊຸມຄະນະປະຈຳ... (ໜ້າ 7)



ລັດຖະບານສິງກະໂປ... (ໜ້າ 10)




ນະໂຍບາຍໃຫ້ສັນຊາດ... (ໜ້າ 12)

# ທາລືແນວຄວາມຄິດລິເລີ່ມເມືອງອັດສະລິຍະແຫ່ງສຸຂະພາບຂອງອາຊຽນ



(ສພຊ) ໃນວັນທີ 19 ມັງກອນ 2024 ທີ່ຫ້ອງຮັບແຂກ ສະພາແຫ່ງຊາດ, ທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ ໄດ້ຕ້ອນຮັບການເຂົ້າພົບປະຂອງທ່ານ ຢຸນ ຈູ ຮົງ ປະທານຄະນະບໍລິຫານງານເວທີກອງປະຊຸມສາກົນວ່າດ້ວຍຕົວເມືອງແຫ່ງສຸຂະພາບໂລກ (World Health City Forum) ພ້ອມດ້ວຍຄະນະ ເນື່ອງໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກຢູ່ ສປປລາວ.

ຈຸດປະສົງຂອງການພົບປະເຮັດວຽກຄັ້ງນີ້ ເພື່ອສືບຕໍ່ປຶກສາຫາລືກ່ຽວກັບແນວຄວາມຄິດລິເລີ່ມກ່ຽວກັບ ເມືອງອັດສະລິຍະແຫ່ງສຸຂະພາບຂອງປະຊາຄົມອາຊຽນ (ASEAN Smart Health City Initiative) ເຊິ່ງກ່ອນໜ້ານີ້ຄະນະຜູ້ແທນກຳມາທິການວັດທະນະທຳ-ສັງຄົມ ນຳໂດຍທ່ານ ນາງ ທຸມມາລີ ວົງພະຈັນ ໄດ້ເດີນທາງໄປເຮັດວຽກຢ່າງເປັນທາງການຮ່ວມກັບປະທານກຳມາທິການເພື່ອສຸຂະພາບ ແລະ ສະຫວັດດີການ, ສະພາແຫ່ງຊາດ ສ.ເກົາຫຼີ ໃນລະຫວ່າງວັນທີ 02-05 ພຶດສະພາ 2023 ເຊິ່ງທ່ານ ຢຸນ ຈູ ຮົງ ເປັນທີ່ປຶກສາຂອງກຳມາທິການດັ່ງກ່າວ ແລະ ເຄີຍໄດ້ພົບປະກັນມາກ່ອນແລ້ວ 2 ຄັ້ງ ໂດຍທັງສອງຝ່າຍໄດ້ສຶກສາກ່ຽວກັບແນວຄວາມຄິດລິເລີ່ມກ່ຽວກັບເມືອງອັດສະລິຍະແຫ່ງສຸຂະພາບຂອງປະຊາຄົມອາຊຽນຢາກເອົາເປັນຫົວຂໍ້ໜຶ່ງໃນຂົງເຂດສັງຄົມ ສະເໜີຕໍ່ກອງປະຊຸມໄອປາ ຄັ້ງທີ 45 ທີ່ສະພາແຫ່ງຊາດລາວຈະເປັນເຈົ້າພາບ.

ທ່ານປະທານກຳມາທິການວັດທະນະທຳ-ສັງຄົມ ໄດ້ແຈ້ງໃຫ້ຮູ້ສະພາບການທີ່ພົ້ນເດັ່ນການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ແຈ້ງໃຫ້ຮັບຊາບໃນປີ 2024 ສປປ ລາວ ຈະເປັນປະທານອາຊຽນ, ສະພາແຫ່ງຊາດລາວ ກໍຈະເປັນປະທານໄອປາ; ສະແດງຄວາມຂອບໃຈມາຍັງຄະນະບໍລິຫານງານເວທີກອງປະຊຸມສາກົນວ່າດ້ວຍຕົວເມືອງແຫ່ງສຸຂະພາບໂລກ ທີ່ຈະສືບຕໍ່ໃຫ້ການສະໜັບໜູນ ສປປ ລາວ ໃນການເປັນປະທານອາຊຽນໃນຄັ້ງນີ້ ແລະອວຍພອນໄຊໃຫ້ທ່ານຢຸນ ຈູ ຮົງ ພ້ອມດ້ວຍຄະນະ ຈົ່ງປະສົບຜົນສຳເລັດໃນການຢ້ຽມຢາມ ສປປລາວ ແລະ ເດີນທາງກັບຄືນປະເທດດ້ວຍຄວາມສະຫວັດດີພາບ.

ທ່ານ ຢຸນ ຈູ ຮົງ ກໍໄດ້ກ່າວສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ, ພ້ອມແຈ້ງໃຫ້ຊາບຈຸດປະສົງການມາເຄື່ອນໄຫວເຮັດວຽກຢູ່ ສປປ ລາວ ໃນເທື່ອນີ້ ພ້ອມໃຫ້ຄຳໝັ້ນວ່າ: ຈະສືບຕໍ່ຊຸກຍູ້ສົ່ງເສີມໃຫ້ການຊ່ວຍເຫຼືອ ສປປລາວ ໃນການເປັນປະທານອາຊຽນ ແລະ ປະທານໄອປາ ກໍຄືການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ; ອວຍພອນໃຫ້ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມທີ່ມີມາແຕ່ດົນນານລະຫວ່າງ ສ.ເກົາຫຼີ ກັບ ສປປ ລາວ ແລະ ການເປັນຄູ່ຮ່ວມຍຸດທະສາດຂອງສອງປະເທດ ຈົ່ງສືບຕໍ່ຂະຫຍາຍຕົວ ແລະ ແຕກດອກອອກຜົນຍິ່ງໆຂຶ້ນໄປ.

**(ອານຸສອນ ພູມມີທອນ)**

# ສະເຕັບສ໌ ສະຫຼຸບວຽກງານປີ 2023 ແລະ ວາງແຜນການປີ 2024




(ສພຊ) ໃນວັນທີ 18 ມັງກອນ 2024 ທີ່ສະພາແຫ່ງຊາດ, ຄະນະຊີ້ນຳໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຫຼື ສະເຕັບສ໌ (STEPS) ໄດ້ຈັດກອງປະຊຸມສະຫຼຸບວຽກງານປະຈຳປີ 2023 ແລະ ວາງແຜນການປະຈຳປີ 2024 ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ປອ. ບຸນທັນ ບຸນວິໄລ ຮອງເລຂາທິການສະພາແຫ່ງຊາດ, ຫົວໜ້າກອງເລຂາຄຸ້ມຄອງແຫຼ່ງທຶນຊ່ວຍເຫຼືອລ້າ ແລະ ທ່ານ ນາງ ມາຕິນ ແທເຣີ ຜູ້ຕາງໜ້າອົງການສະຫະປະຊາຊາດເພື່ອການພັດທະນາປະຈຳ ສປປ ລາວ ໂດຍການເຂົ້າຮ່ວມຂອງທ່ານ ໄມເຄີນ ຮອນນິງ ຜູ້ຕາງໜ້າອົງການພັດທະນາສາກົນປະເທດສະຫະລັດອາເມລິກາ ປະຈຳ ສປປ ລາວ, ບັນດາທ່ານຜູ້ຕາງໜ້າຈາກກົມພົວພັນສາກົນ ກະຊວງແຜນການ ແລະ ການລົງທຶນ, ກົມອົງການຈັດຕັ້ງສາກົນ ກະຊວງການຕ່າງປະເທດ ແລະ ແຂກທີ່ຖືກເຊີນຈາກຄະນະເລຂາທິການ, ກຳມາທິການພາຍໃນສະພາແຫ່ງຊາດ.

ທັງນີ້ເພື່ອເປັນການທົບທວນຄືນການຈັດຕັ້ງປະຕິບັດບັນດາແຜນກິດຈະກຳ ແລະ ຜົນສຳເລັດໃນປີ 2023 ຂອງໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ຮັບຮອງເອົາດ້ານເອກະສານທີ່ກ່ຽວຂ້ອງກັບໂຄງການ ເປັນຕົ້ນພາລະບົດບາດຂອງຄະນະຊີ້ນຳໂຄງການ, ແຜນວຽກປະຈຳປີ 2024 ແລະ ຕົວຊີ້ວັດຂອງຄາດຄະເນຜົນໄດ້ຮັບຈາກການຈັດຕັ້ງປະຕິບັດບັນດາແຜນກິດຈະກຳ ທັງເປັນການປຶກສາຫາລື ແລະ ແລກປ່ຽນກ່ຽວກັບວຽກງານປິ່ນອ້ອມຂອງໂຄງການເພື່ອອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດໂຄງການໃຫ້ໄປຕາມແຜນທີ່ວາງໄວ້.

ທ່ານ ປອ. ບຸນທັນ ບຸນວິໄລ ໄດ້ກ່າວໃນບາງຕອນວ່າ: ກອງປະຊຸມຄັ້ງນີ້ ເປັນວາລະທີ່ສຳຄັນທີ່ພວກເຮົາຈະໄດ້ທົບທວນຄືນການຈັດຕັ້ງປະຕິບັດບັນດາກິດຈະກຳ ແລະ ຜົນງານຂອງການຈັດຕັ້ງປະຕິບັດແຜນວຽກປະຈຳປີ 2023, ພິຈາລະນາຮັບຮອງເອົາແຜນວຽກປະຈຳປີ 2024 ຂອງໂຄງການ ພ້ອມທັງໃຫ້ຄຳແນະນຳ ແລະ ຮ່ວມກັນວາງແຜນໂຄງການໃນໄລຍະຕໍ່ໜ້າ ແລະ ປຶກສາຫາລື, ແລກປ່ຽນກັບບັນດາທ່ານສະມາຊິກຄະນະຊີ້ນຳ ແລະ ຜູ້ໃຫ້ທຶນ ເພື່ອເຮັດໃຫ້ສາມາດບັນລຸຕາມແຜນການຂອງໂຄງການ. ໂດຍສະເພາະປີ 2024 ທີ່ ສປປລາວ ໄດ້ຮັບກຽດເປັນປະທານອາຊຽນ ແລະ ສະພາແຫ່ງຊາດລາວ ຈະເປັນເຈົ້າພາບຈັດກອງປະຊຸມໃຫຍ່ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ ຄັ້ງທີ 45 ເຊິ່ງເປັນພັນທະ ແລະ ບົດບາດທີ່ສຳຄັນໃນການປະຕິບັດບົດບາດການທູດລັດຖະສະພາໃນລະດັບພາກພື້ນ; ສະນັ້ນ, ວຽກບຸລິມະສິດຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ກໍແມ່ນການກະກຽມຄວາມພ້ອມຮອບດ້ານໃຫ້ແກ່ການດຳເນີນກອງປະຊຸມໄອປາທີ່ມີຫຼາຍດ້ານທີ່ຕ້ອງໄດ້ຊຸ້ນຂ້ຽວ ກະກຽມ ແລະ ຈັດຕັ້ງປະຕິບັດ. ແຕ່ສິ່ງທີ່ດີ ແມ່ນພວກເຮົາມີໂຄງການສະເຕັບສ໌ເຊິ່ງເປັນໜຶ່ງໂຄງການຍຸດທະສາດ ທີ່ພ້ອມຈະໃຫ້ການສະໜັບສະໜູນທາງດ້ານງົບປະມານ ແລະ ດ້ານວິຊາການ ໃນການປະຕິບັດພາລະບົດບາດ ແລະ ແຜນວຽກບຸລິມະສິດຂອງສະພາແຫ່ງຊາດ ໃຫ້ມີຜົນສຳເລັດສູງ.

ອ່ານຕໍ່ໜ້າ 12

## ເລື່ອງເດັ່ນ ຂ່າວເດັດ

*# ຄັດໂດຍ: ທອມສະນິດ*

❒ ຜົນກະທົບທາງດ້ານເສດຖະກິດ ຂອງພະຍາດໂຄວິດ-19, ຜົນກະທົບຂອງວິກິດການສະບຽງອາຫານ, ເສດຖະກິດໂລກ ແລະ ຄ່າຄອງຊີບທີ່ສູງຂຶ້ນ ທີ່ເກີດຈາກອັດຕາເງິນເຟີ້ ກາຍເປັນປັດໄຈທີ່ເຮັດໃຫ້ບັນດາຫຼາຍຄອບຄົວໃນ ສປປ ລາວ ໂດຍສະເພາະໃນພື້ນທີ່ໆມີຄວາມສ່ຽງປະສົບກັບຄວາມຫຍຸ້ງຍາກໃນການຫາອາຫານໃຫ້ພຽງພໍ ເພື່ອມາລ້ຽງດູຄອບຄົວ. ການປະເມີນຄວາມໝັ້ນຄົງດ້ານພືດ ແລະ ສະບຽງອາຫານແຫ່ງຊາດ ໃນເດືອນທັນວາ 2022 ລາຍງານວ່າ ມີປະມານ 1 ລ້ານກວ່າຄົນ (13.9%) ຄາດຄະເນວ່າຈະຂາດແຄນສະບຽງອາຫານລະດັບປານກາງ ແລະ 71.000 ຄົນ (0.9%) ແມ່ນຂາດແຄນສະບຽງອາຫານໃນລະດັບຢ່າງຮ້າຍແຮງ ໃນ ສປປ ລາວ. ພ້ອມນີ້, ການຕິດຕາມຄວາມໝັ້ນຄົງດ້ານສະບຽງອາຫານຂອງອົງການອາຫານໂລກ ລາຍງານວ່າ: ສະເລ່ຍ 1 ໃນ 7 ຄົວເຮືອນ ແມ່ນປະສົບກັບຄວາມບໍ່ໝັ້ນຄົງທາງດ້ານສະບຽງອາຫານຢ່າງໜັກໜ່ວງ ໂດຍມີຫຼາຍກວ່າ 18% ຂອງປະຊາກອນທີ່ບໍລິໂພກອາຫານບໍ່ພຽງພໍ ຂໍ້ມູນຍັງສະແດງໃຫ້ເຫັນວ່າຫຼາຍແຂວງໃນພາກເໜືອ ແລະ ພາກໃຕ້ຂອງປະເທດ ແມ່ນປະເຊີນກັບອັດຕາຄວາມບໍ່ໝັ້ນຄົງດ້ານສະບຽງອາຫານສູງກວ່າຄ່າສະເລ່ຍແຫ່ງຊາດ.

**ໜສພ. ປະເທດລາວ 09/01/2024**

❒ ປັດຈຸບັນ, ສປປ ລາວ ໄດ້ມີການພົວພັນການທູດກັບ 149 ປະເທດໃນໂລກ (ຫຼ້າສຸດແມ່ນກັບສາທາລະນະລັດ ບົດສະວານາ) ມີສຳນັກງານຜູ້ຕາງໜ້າລາວ ປະຈຳຢູ່ຕ່າງປະເທດ 42 ແຫ່ງ ໃນນັ້ນ, ມີສະຖານເອກອັກຄະລັດຖະທູດ 28 ແຫ່ງ ສຳນັກງານຜູ້ຕາງໜ້າຖາວອນ 3 ແຫ່ງ ສະຖານກົງສຸນໃຫຍ່ 10 ແຫ່ງ ແລະ ຫ້ອງການກົງສູນ 1 ແຫ່ງ.

**ໜສພ. ວຽງຈັນໃໝ່ 09/01/2024**

❒ ລາວໂທລະຄົມໄດ້ເປີດນຳໃຊ້ລະບົບ 5G ໃນນະຄອນຫຼວງວຽງຈັນ ຈຳນວນ 28 ຈຸດ ໂດຍກວມເອົາຂົງເຂດຕົວເມືອງ, ສະຖານທີ່ສຳຄັນ, ແຫຼ່ງທ່ອງທ່ຽວຕ່າງໆ ແລະມີແຜນຂະຫຍາຍໄປໃນທົ່ວປະເທດເຊິ່ງເຕັກໂນໂລຊີ 5G ແມ່ນເຕັກໂນໂລຊີທີ່ທັນສະໄໝນຳຄວາມກ້າວໜ້າມາສູ່ສັງຄົມ ແລະ ໃນຂົງເຂດອາຊີ ແມ່ນໄດ້ນຳໃຊ້ເຕັກໂນໂລຊີ 5G ໃນຫຼາຍຂົງເຂດວຽກງານ ເຊັ່ນ: ທາງດ້ານທຸລະກິດ online, E-commerce, ນຳໃຊ້ປັນຍາປະດິດ AI, IoT, Ro-botic ເຂົ້າໃນຫຼາຍຂົງເຂດອຸດສາຫະກຳ, ກະສິກຳ, ວຽກງານສາທາລະນະສຸກ ເຊິ່ງລ້ວນແລ້ວແຕ່ເປັນການສ້າງເງື່ອນໄຂໃຫ້ສັງຄົມ ແລະ ຜູ້ຊົມໃຊ້ໄດ້ມີວິຖີຊີວິດທີ່ນັບມື້ນັບສະດວກສະບາຍຂຶ້ນ, ວ່ອງໄວ ແລະ ມີຄວາມປອດໄພສູງ.

**ໜສພ. ປະເທດລາວ 11/01/2024**

❒ ໃນ 1 ປີຜ່ານມາ, ມີນັກໂທດທີ່ໄດ້ຮັບການໃຫ້ອະໄພຍະໂທດ ຕາມລັດຖະດຳລັດ ຂອງປະທານປະເທດ ສະບັບເລກທີ 219/ປປທ, ລົງວັນທີ 21 ພະຈິກ 2023 ທັງໝົດ 1.824 ຄົນ, ຍິງ 238 ຄົນ, ຕ່າງປະເທດ 16 ຄົນ, ນັກໂທດຕະຫຼອດຊີວິດ 4 ຄົນ, ຍິງ 2 ຄົນ, ນັກໂທດປະຫານຊີວິດ 9 ຄົນ, ຍິງ 2 ຄົນ. ໃນນີ້, ນັກໂທດທີ່ໄດ້ເງື່ອນໄຂຫຼຸດຜ່ອນໂທດທັງໝົດ 1.602 ຄົນ, ຍິງ 200 ຄົນ, ຕ່າງປະເທດ 13 ຄົນ, ນັກໂທດຕະຫຼອດຊີວິດ 4 ຄົນ, ຍິງ 2 ຄົນ; ຈຳນວນນັກໂທດທີ່ໄດ້ເງື່ອນໄຂປ່ອຍຕົວ 222 ຄົນ, ຍິງ 38 ຄົນ, ຕ່າງປະເທດ 3 ຄົນ; ນັກໂທດທີ່ຖືກສານຕັດສິນປະຫານຊີວິດ ໄດ້ຮັບອະໄພຍະໂທດ ມາເປັນໂທດຕັດອິດສະຫຼະພາບຕະຫຼອດຊີວິດ ຕາມລັດຖະດຳລັດຂອງປະທານປະເທດ ສະບັບເລກທີ 220/ປປທ, ລົງວັນທີ 21 ພະຈິກ 2023 ມີ 9 ຄົນ, ຍິງ 2 ຄົນ.

**ໜສພ. ປະເທດລາວ 17/01/2024**

# ສ້າງຄວາມເຂັ້ມແຂງວຽກງານສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ, ການໂຄສະນາເຜີຍແຜ່ ແລະ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ




(ສພຊ) ເພື່ອເຮັດໃຫ້ພະນັກງານ-ວິຊາການ ຍຸຕິທຳ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ) ສະ ພາປະຊາຊົນຂັ້ນແຂວງ (ສພຂ), ສະພາແຫ່ງຊາດ (ສພຊ) ແລະ ອົງການທີ່ກ່ຽວຂ້ອງ ຮັບຮູ້ເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບວຽກງານການສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ; ການໂຄສະນາເຜີຍແຜ່, ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ເພື່ອເປັນເສນາທິການທາງດ້ານວຽກງານດັ່ງກ່າວໃຫ້ການນຳຂອງຕົນ ໄດ້ຢ່າງມີຄຸນນະພາບສູງ ແລະ ສາມາດນຳເອົາບົດຮຽນດັ່ງກ່າວໄປໝູນໃຊ້ເຂົ້າໃນການປະຕິບັດໜ້າທີ່ວຽກງານຕົວຈິງ ໄດ້ຢ່າງມີປະສິດທິຜົນ ແລະ ເພື່ອເຮັດໃຫ້ການປະສານງານໃນການຈັດຕັ້ງປະຕິບັດວຽກງານການສ້າງແລະປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ; ການໂຄ ສະນາເຜີຍແຜ່, ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ລະຫວ່າງກຳມາທິການຍຸຕິທຳ, ກຳມາທິການ ປກຊ-ປກສກັບອົງການທີ່ກ່ຽວຂ້ອງ ໃຫ້ມີຄວາມຖືກຕ້ອງຕາມກົດໝາຍກຳນົດ ແລະ ໄປຕາມທິດທາງລວງດຽວກັນ. ກຳມາທິການຍຸຕິທຳ ຮ່ວມກັບກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄດ້ຈັດກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງກ່ຽວກັບວຽກງານການສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ;ການໂຄສະນາເຜີຍແຜ່, ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໃຫ້ແກ່ພະນັກງານ-ວິຊາການ ຍຸຕິທຳ, ປກຊ-ປກສ ຂອງ ສພຂ, ສພຊ ແລະ ອົງການທີ່ກ່ຽວຂ້ອງ ໃນລະຫວ່າງວັນທີ 18-19 ມັງກອນ 2024 ທີ່ເມືອງວັງວຽງ ແຂວງວຽງຈັນ ໂດຍການເປັນປະທານຮ່ວມຂອງທ່ານ ຄຳແພງ ວິລະພັນ ປະທານກຳມາທິການຍຸຕິທຳ ແລະ ທ່ານ ພົຕ. ປອ. ວົງສັກ ພັນທະວົງ ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ເຂົ້າຮ່ວມມີບັນດາທ່ານຮອງປະທານກຳມາທິການຍຸຕິທຳ, ຮອງປະທານກຳມາທິການ ປກຊ-ປກສ, ປະທານ-ຮອງປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ຈາກ 18ເຂດເລືອກຕັ້ງ, ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ, ສະຫະພັນນັກຮົບເກົ່າ, ຄະນະກົມ, ຄະນະພະແນກ ພ້ອມດ້ວຍພະນັກງານ-ວິຊາການຈາກກຳມາທິການຍຸຕິທຳ, ກຳມາທິການ ປກຊ-ປກສ ແລະ ຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ.

ໃນກອງປະຊຸມໄດ້ຮັບຟັງການສະເໜີຫົວຂໍ້ຄື: ຍົກສູງວຽກງານສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມ; ບົດຮຽນການສ້າງ ແລະ ປັບປຸງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກແລະການຜັນຂະຫຍາຍເນື້ອໃນບັນດາມາດຕາຂອງກົດໝາຍອອກເປັນນິຕິກຳໃຕ້ກົດໝາຍ; ບົດຮຽນກ່ຽວກັບຂັ້ນຕອນ ແລະ ວິທີການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ພ້ອມກັນນັ້ນ, ກອງປະຊຸມຍັງໄດ້ຮັບຟັງການເຜີຍແຜ່ຄຳແນະນຳວ່າດ້ວຍການສະຫຼຸບຕີລາຄາການໂຄສະນາເຜີຍແຜ່ກົດໝາຍ, ຄຳແນະນຳການສ້າງແຜນການສ້າງ ແລະ ປັບປຸງກົດໝາຍ ໄລຍະ 2026-2030, ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕິດຕາມກວດກາການຜັນຂະຫຍາຍມາດຕາຂອງກົດໝາຍທີ່ກຳນົດໃຫ້ອອກເປັນນິຕິກຳໃຕ້ກົດໝາຍ.

ທ່ານ ຄຳແພງ ວິລະພັນ ໄດ້ມີຄຳເຫັນວ່າ: ບັນດາເນື້ອໃນທີ່ນຳມາເຝິກອົບຮົມ ແລະ ເຜີຍແຜ່ໃນກອງປະຊຸມຄັ້ງນີ້ ມີຄວາມໝາຍສຳຄັນ ເຖິງວ່າຈະມີເວລາຈຳກັດ; ສະນັ້ນ, ເພື່ອເຮັດໃຫ້ບັນດາເນື້ອໃນຂອງກອງປະຊຸມໄດ້ຮັບການຄົ້ນຄວ້າຢ່າງເລິກເຊິ່ງ ຮຽກຮ້ອງມາຍັງບັນດາທ່ານຄະນະນຳ, ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ, ຜູ້ແທນກອງປະຊຸມ ຈົ່ງນຳໃຊ້ສິດປະຊາທິປະໄຕ ແລະ ເຊີດຊູຄວາມຮັບຜິດຊອບການເມືອງຂອງຕົນຕໍ່ກັບບັນດາເນື້ອໃນທີ່ນຳມາຄົ້ນຄວ້າ, ແລກປ່ຽນຄຳເຫັນ ແລະ ເຊື່ອມຊຶມ ຢ່າງກົງໄປກົງມາ ດ້ວຍເຫດ, ດ້ວຍຜົນ ເພື່ອເຮັດໃຫ້ບັນດາເນື້ອໃນຕ່າງໆນັ້ນສາມາດນຳໄປຈັດຕັ້ງຜັນຂະຫຍາຍໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານໃນຕໍ່ໜ້າ ໃຫ້ມີຜົນສຳເລັດຫຼາຍຂຶ້ນກວ່າເກົ່າ ເພື່ອຮັບປະກັນສິດສະເໝີພາບຕໍ່ໜ້າກົດໝາຍຂອງປະຊາຊົນ ເຮັດໃຫ້ສັງຄົມມີຄວາມສະຫງົບ ເປັນລະບຽບຮຽບຮ້ອຍ, ເຮັດໃຫ້ການຄຸ້ມຄອງລັດ ຄຸ້ມຄອງເສດຖະກິດ-ສັງຄົມ ມີຄວາມຍຸຕິທຳ ແລະ ໂປ່ງໃສ.

ຈາກນັ້ນ, ບັນດາຜູ້ເຂົ້າຮ່ວມໄດ້ສົນທະນາແລກປ່ຽນບົດຮຽນ ແລະແກ້ຂໍ້ຂ້ອງໃຈໃນແຕ່ລະຫົວຂໍ້ທີ່ທາງກອງປະຊຸມໄດ້ຍົກຂຶ້ນມາ.

ກອງປະຊຸມຄັ້ງນີ້ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານງົບປະມານສົມທົບຈາກໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (STEPs).

**(ນາງ ສຸພາວັນ ທອມສະນິດ)**

## ສພຊ...

(ຕໍ່ຈາກໜ້າ 1)

ຂອງພັກ; ເພື່ອເປັນການລະນຶກເຖິງຄຸນງາມຄວາມດີ, ຜົນງານຂອງປະທານ ຄຳໄຕ ສີພັນດອນ ຜູ້ນຳຮຸ່ນທຳອິດຂອງການປະຕິວັດລາວ ທີ່ມີຕໍ່ປະເທດຊາດ ແລະ ຮ່ຳຮຽນເອົາແບບຢ່າງອັນດີງາມເພື່ອເຝິກຝົນຫຼໍ່ຫຼອມຕົນເອງໃຫ້ກາຍເປັນສະມາຊິກພັກທີ່ດີ, ສືບທອດພາລະກິດຂອງພັກ.

ໃນພິທີ, ໃຫ້ກຽດປາຖະກະຖາລະນຶກວັນເກີດຂອງປະທານ ຄຳໄຕ ສີພັນດອນ ຄົບຮອບ 100 ປີ ໂດຍສະຫາຍ ຄຳພັນ ເຜີຍຍະວົງ ເລຂາທິການສູນກາງພັກ, ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ, ປະທານສະພາທິດສະດີສູນກາງພັກ ເຊິ່ງໄດ້ຍົກໃຫ້ເຫັນເຖິງຊີວິດການກຳເນີດ ແລະ ການເຕີບໃຫຍ່ໃນແປວໄຟແຫ່ງການປະຕິວັດຂອງປະທານ ຄຳໄຕ ສີພັນດອນ; ແບບ ແຜນຊີ້ນຳ-ນຳພາ; ການອຸທິດຕົນຢ່າງສຸດກົກສຸດປາຍເພື່ອປະເທດຊາດ, ເພື່ອປະຊາຊົນ, ເພື່ອຄວາມມັ່ງຄັ່ງເຂັ້ມແຂງແລະຄວາມຈະເລີນວັດທະນາຂອງປະເທດຊາດ, ເພື່ອຄວາມຢູ່ດີກິນດີ ແລະ ຄວາມຮັ່ງມີຜາສຸກຂອງປະຊາຊົນລາວບັນດາເຜົ່າ. ປະທານຄຳໄຕສີພັນດອນ ແມ່ນໜຶ່ງໃນບັນດາຜູ້ນຳຮຸ່ນທຳອິດຂອງການປະຕິວັດລາວ ໄດ້ຮ່ວມກັບຜູ້ນຳຄົນອື່ນໆນຳພາພາລະກິດການຕໍ່ສູ້ປົດປ່ອຍປະເທດຊາດອອກຈາກແອກປົກຄອງຂອງຈັກກະພັດຕ່າງດ້າວກໍຄືພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ; ເພິ່ນເປັນຜູ້ນຳທີ່ມີນ້ຳໃຈຮັກຊາດອັນສູງສົ່ງ, ເສຍສະຫຼະທຸກສິ່ງທຸກຢ່າງອຸທິດສະຕິປັນຍາ ແລະ ກຳລັງວັງຊາຢ່າງບໍ່ຮູ້ອິດຮູ້ເມື່ອຍ, ຄຽງບ່າຄຽງໄຫຼ່ກັບປະທານ ໄກສອນ ພົມວິຫານ ແລະ ຜູ້ນຳຄົນອື່ນໆ ຈັດຕັ້ງນຳພາຂະບວນການປະຕິວັດເຕີບໃຫຍ່ຂະຫຍາຍຕົວ ແລະ ຍາດໄດ້ໄຊຊະນະຢ່າງຕໍ່ເນື່ອງ, ຍາດໄດ້ຜົນສຳເລັດຢ່າງມີໄຊ ແລະ ພາປະເທດຊາດກ້າວຂຶ້ນສູ່ຈຸດໝາຍສັງຄົມນິຍົມເທື່ອລະກ້າວຢ່າງໜັກແໜ້ນ. ປະທານ ຄຳໄຕ ສີພັນດອນ ຍາມໃດກໍໄດ້ຮັບຄວາມນັບຖືຮັກແພງແລະເຊື່ອໝັ້ນໄວ້ວາງໃຈຈາກໝູ່ຄະນະ ກໍຄືພະນັກງານນັກຮົບ ແລະ ປະຊາຊົນລາວບັນດາເຜົ່າ, ໄດ້ຮັບມອບໝາຍຫຼາຍໜ້າທີ່ສຳຄັນເປັນລຳດັບມາ; ຈາກຜູ້ແທນລັດຖະບານລາວອິດສະຫຼະປະຈຳເຂດໃຕ້ລາວ, ເປັນປະທານຄະນະກຳມະການຕໍ່ຕ້ານເຂດກາງ, ເປັນກຳມະການສູນກາງແນວລາວອິດສະຫຼະແລະແນວລາວຮັກຊາດ, ເປັນກຳມະການສູນກາງພັກ; ໄດ້ຮັບການປະດັບຊັ້ນພົນເອກແລະເປັນຜູ້ບັນຊາການສູງສຸດກອງທັບປົດປ່ອຍປະຊາຊົນລາວ ແລະ ກອງທັບປະຊາຊົນລາວໃນເວລາຕໍ່ມາ; ເປັນກຳມະການກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ, ເປັນຮອງນາຍົກລັດຖະມົນຕີ, ເປັນລັດຖະມົນຕີກະຊວງປ້ອງກັນປະເທດ, ເປັນນາຍົກລັດຖະມົນຕີ ແລະເປັນຜູ້ນຳສູງສຸດຂອງພັກແລະລັດເຮົາ.

ສະຫຼຸບແລ້ວ, ປະທານ ຄຳໄຕ ສີພັນດອນ ແມ່ນຜູ້ໜຶ່ງໃນບັນດາຜູ້ນຳຮຸ່ນກໍ່ຕັ້ງຂະບວນການ ແລະ ບຸກເບີກເສັ້ນທາງການປະຕິວັດຢູ່ປະເທດເຮົາ ເຊິ່ງຍາມໃດກໍໜັກແໜ້ນທາງດ້ານການເມືອງ, ມີສະຕິຕໍ່ການຈັດຕັ້ງ, ມີຄວາມຮັບຜິດຊອບສູງຕໍ່ໜ້າທີ່ທີ່ໄດ້ຮັບມອບໝາຍ; ເລີ່ມຈາກພະນັກງານທຳມະດາ ກາຍເປັນຜູ້ຊີ້ນຳ-ບັນຊາ ແລະ ນຳພາຂະບວນການຕໍ່ສູ້ປົດປ່ອຍຊາດ, ຄຽງບ່າຄຽງໄຫຼ່ກັບປະທານ ໄກສອນ ພົມວິຫານ, ປະທານ ສຸພານຸວົງ ແລະ ຜູ້ນຳອື່ນໆຂອງແນວລາວສ້າງຊາດ ໄດ້ຮັບໄຊຊະນະ, ສະຖາປະນາ ສປປ ລາວ ຂຶ້ນຢ່າງສະຫງ່າຜ່າເຜີຍ ໃນວັນທີ 2 ທັນວາ ປີ 1975; ຕໍ່ຈາກນັ້ນ, ກໍໄດ້ປະກອບສ່ວນຄົ້ນຄວ້າ ແລະ ກຳນົດທິດທາງຍຸດທະສາດໃນການປົກປັກຮັກສາແລະສ້າງສາພັດທະນາປະເທດຊາດລວມທັງແນວທາງປ່ຽນແປງໃໝ່ຢ່າງຖືກຕ້ອງ, ສອດຄ່ອງ ທັງນຳພາ-ຊີ້ນຳການຈັດຕັ້ງປະຕິບັດໄດ້ຮັບຜົນສຳເລັດໃນຫຼາຍດ້ານ.

ຫຼັງຈາກນັ້ນ, ສະຫາຍ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ຍົກໃຫ້ເຫັນປະຫວັດມູນເຊື້ອແຫ່ງການກຳເນີດເຕີບໃຫຍ່ຂະຫຍາຍຕົວຂອງກອງທັບປະຊາຊົນລາວຕະຫຼອດໄລຍະ 75 ປີ, ຜົນງານອັນພິລະອາດຫານຂອງນັກຮົບຮຸ່ນເກົ່າໄດ້ດຳເນີນການຕໍ່ສູ້ກູ້ຊາດຕ້ານພວກຈັກກະພັດຕ່າງດ້າວທີ່ມາຮຸກຮານ ແລະ ກົດຂີ່ຂູດຮີດ ຈົນເຮັດໃຫ້ປະຊາຊົນລາວມີນ້ຳໃຈຄຽດແຄ້ນ ບໍ່ຍອມຈຳນົນຕໍ່ພວກລ່າເມືອງຂຶ້ນທັງແບບເກົ່າ ແລະ ແບບໃໝ່; ດ້ວຍຄວາມທໍລະມານດັ່ງກ່າວ ຈຶ່ງໄດ້ສ້າງຕັ້ງກອງທັບປະຊາຊົນລາວຂຶ້ນໃນວັນທີ 20 ມັງກອນ 1949 ນັບແຕ່ນັ້ນມາ ກອງທັບປະຊາຊົນລາວໄດ້ເຕີບໃຫຍ່ເຂັ້ມແຂງພາຍໃຕ້ການຊີ້ນຳ-ນຳພາຂອງພັກປະຊາຊົນປະຕິວັດລາວ ນຳພາຕໍ່ສູ້ກູ້ຊາດຈົນຍາດມາໄດ້ໄຊຊະນະຢ່າງລຽນຕິດ ສາມາດຊີ້ນຳ-ນຳພາປະຊາຊົນລາວບັນດາເຜົ່າ ປົດປ່ອຍປະເທດຊາດໄດ້ຢ່າງສົມບູນ ແລະ ສະຖາປະນາ ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວຂຶ້ນຢ່າງສະຫງ່າຜ່າເຜີຍໃນວັນທີ 2 ທັນວາ 1975. ການທວນຄືນມູນເຊື້ອອັນສຳຄັນດັ່ງກ່າວຄັ້ງນີ້ ເພື່ອສະແດງຄວາມເຄົາລົບຮັກ, ກະຕັນຍູຮູ້ບຸນຄຸນຕໍ່ຜົນງານອັນໃຫຍ່ຫຼວງຂອງກອງທັບປະຊາຊົນລາວ ເພື່ອເປັນການປຸກລະດົມເຮັດໃຫ້ພະນັກງານ-ລັດຖະກອນ, ສະມາຊິກພັກ ແລະ ປະຊາຊົນທຸກຊັ້ນຄົນ ມີຈິດໃຈຮັກຊາດ ຮັກບ້ານເກີດເມືອງນອນ ຮັກຜືນແຜ່ນດິນອັນຄົບຖ້ວນ ຮັກລະບອບໃໝ່, ສ້າງຄວາມສາມັກຄີໃຫ້ເປັນປຶກແຜ່ນ ສ້າງສະຕິເປັນເຈົ້າຕົນເອງເພິ່ງຕົນເອງ, ມີສະຕິລະວັງຕົວຕໍ່ກົນອຸບາຍຫັນປ່ຽນໂດຍສັນຕິຂອງອິດທິກຳລັງປໍລະປັກ ແລະເປັນເຈົ້າການເຂົ້າຮ່ວມປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານຂອງພັກ ທັງເປັນການໂຄສະນາສຶກສາອົບຮົມນ້ຳໃຈປະຕິວັດ, ຄວາມກະຕັນຍູຮູ້ບຸນຄຸນແລະຮ່ຳຮຽນເອົາແບບຢ່າງຄຸນສົມບັດສິນທຳປະຕິວັດ, ຄຸນງາມຄວາມດີຂອງປະທານ ຄຳໄຕ ສີພັນດອນ ກໍຄືບັນດາຜູ້ນຳຮຸ່ນກ່ອນ ແລະ ພະນັກງານປະຕິວັດ ຜູ້ທີ່ໄດ້ເສຍສະຫຼະຊີວິດ, ຜູ້ເສຍອົງຄະ, ຄອບຄົວຜູ້ທີ່ມີຜົນງານທີ່ໄດ້ປະ ກອບສ່ວນເຂົ້າໃນພາລະກິດຕໍ່ສູ້ປົດປ່ອຍຊາດ, ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ຕະຫຼອດໄລຍະ 75 ປີຜ່ານມາ ຈົນມີຄວາມຈະເລີນເຂັ້ມແຂງຮອດປັດຈຸບັນ.



ເຂົ້າຮ່ວມພິທີປາຖະກະຖາໃນຄັ້ງນີ້ ມີຄະນະບໍລິຫານງານພັກສະພາແຫ່ງຊາດ, ຄະນະພັກຮາກຖານ, ໜ່ວຍພັກຮາກຖານ, ໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ, ສະມາຊິກພັກ ແລະ ພະນັກງານ-ລັດຖະກອນ ທົ່ວສະພາແຫ່ງຊາດ.

**(ນາງ ກຸກກິກ ບຸດດາໄຊ)**

## ສະພາແຫ່ງຊາດ...

(ຕໍ່ຈາກໜ້າ 1)

ພາຍໃນສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ມີບັນດາທ່ານປະທານ, ຮອງປະທານກຳມາທິການ, ເລຂາທິການ, ຮອງເລຂາທິການ, ຫົວໜ້າ, ຮອງຫົວໜ້າສະຖາບັນຄົ້ນຄວ້ານິຕິກຳ, ຫົວໜ້າ, ຮອງຫົວໜ້າກົມ, ສູນ ແລະ ຫ້ອງການ, ພ້ອມດ້ວຍພະນັກງານຂັ້ນພະແນກ ຕະຫຼອດຮອດພະນັກງານພາຍໃນ ສພຊ ເຂົ້າຮ່ວມຈຳນວນຫຼວງຫຼາຍ.

ກອງປະຊຸມໄດ້ຮັບຟັງການສະຫຼຸບການເຄື່ອນໄຫວວຽກງານແຂ່ງຂັນຮັກຊາດ ແລະ ພັດທະນາ ປະຈຳປີ 2023 ແລະທິດທາງແຜນການປະຈຳປີ 2024. ຈາກນັ້ນ, ກອງປະຊຸມໄດ້ຈັດພິທີມອບໃບຍ້ອງຍໍໃຫ້ແກ່ກົມກອງ ແລະ ບຸກຄົນດີເດັ່ນດັ່ງນີ້: ກົມກອງດີເດັ່ນໄດ້ຮັບໃບຍ້ອງຍໍຂອງຄະນະປະຈຳສະພາແຫ່ງຊາດ ປະກອບມີ: ບັນດາກຳມາທິການ, ຄະນະເລຂາທິການ ແລະ ສະຖາບັນຄົ້ນຄວ້ານິຕິກຳ ຈຳນວນ 11 ກົມກອງ; ກົມ, ສູນ ແລະ ຫ້ອງການທຽບເທົ່າກົມ ຈຳນວນ 28 ກົມກອງ. ບຸກຄົນດີເດັ່ນໄດ້ຮັບໃບຍ້ອງຍໍຂອງຄະນະປະຈຳສະພາແຫ່ງຊາດ: ພະນັກງານ ການນຳຂັ້ນສູງ ຈຳນວນ 39 ທ່ານ ຍິງ 6 ທ່ານ, ພະນັກງານຕຳແໜ່ງບໍລິຫານປະເພດ 1, ລັດຖະກອນວິຊາການ ຈຳ ນວນ 292 ທ່ານ ຍິງ 120 ທ່ານ; ບຸກຄົນດີເດັ່ນໄດ້ຮັບໃບຍ້ອງຍໍຂອງຄະນະເລຂາທິການສະພາແຫ່ງຊາດ ຈຳນວນ 71 ທ່ານ ຍິງ 22 ທ່ານ. ໃບຍ້ອງຍໍຂອງຄະນະປະຈຳສະພາແຫ່ງຊາດແມ່ນມອບໂດຍທ່ານ ປອ. ນາງ ສູນທອນ ໄຊຍະຈັກ ແລະ ໃບຍ້ອງຍໍຂອງຄະນະເລຂາທິການສະພາແຫ່ງຊາດ ແມ່ນມອບໂດຍທ່ານ ນາງ ປິ່ງຄຳ ລາຊະສິມມາ ເລຂາທິການສະພາແຫ່ງຊາດ. ໃນກອງປະຊຸມສະຫຼຸບຄັ້ງນີ້, ບັນດາຕາງໜ້າຄະນະຮັບຜິດຊອບຂະບວນການແຂ່ງຂັນຮັກຊາດ ແລະພັດທະນາ ໄດ້ຂຶ້ນຈັບມືແຂ່ງຂັນປະຈຳປີ 2024 ໂດຍເປັນການສືບຕໍ່ການຈັດຕັ້ງປະຕິບັດໜ້າທີ່ວຽກງານຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງບັນດາກຳມາທິການ,ຄະນະເລຂາທິການແລະສະຖາບັນຄົ້ນຄວ້ານິຕິກຳຂອງສະພາແຫ່ງຊາດ ດ້ວຍຄາດໝາຍຂອງການແຂ່ງຂັນ ໃຫ້ໄວ, ໃຫ້ດີ, ໃຫ້ຫຼາຍ, ໃຫ້ຖືກກົດໝາຍ ແລະ ເນື້ອໃນການແຂ່ງຂັນ ມີ 3 ຂໍ້ຄື: 1. ຍົກສູງວຽກງານດ້ານການເມືອງ-ແນວຄິດ ໃຫ້ມີຄວາມໜັກແໜ້ນໃນທຸກດ້ານ; 2. ຍົກສູງຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ວຽກງານດ້ານວິຊາສະເພາະ ໂດຍສຸມໃສ່ຈັດຕັ້ງຜັນຂະຫຍາຍບັນ ດາ 5 ແຜນງານ 29 ໂຄງການຂອງສະພາແຫ່ງຊາດ, ພິເສດຈະໄດ້ຮ່ວມກັນເປັນເຈົ້າພາບທີ່ດີໃຫ້ແກ່ກອງປະຊຸມໄອປາ ຄັ້ງທີ 45 ໃນປີ 2024; 3. ຍົກສູງຄວາມເປັນເຈົ້າການປັບປຸງກົງຈັກການຈັດຕັ້ງແລະແບບແຜນວິທີການເຮັດວຽກ ໃຫ້ມີປະສິດທິພາບສູງຂຶ້ນ.

ໂອກາດດັ່ງກ່າວ, ທ່ານຮອງປະທານສະພາແຫ່ງຊາດ ໄດ້ມີການໂອ້ລົມຕໍ່ກອງປະຊຸມໂດຍໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະຕີລາຄາສູງຕໍ່ຜົນສຳເລັດໃນການຈັດຕັ້ງປະຕິບັດວຽກງານແຂ່ງຂັນຮັກຊາດ ແລະ ພັດທະນາ ເຊິ່ງບັນດາກຳມາທິການ, ຄະນະເລຂາທິການ, ສະຖາບັນຄົ້ນຄວ້ານິຕິກຳ, ບັນດາກົມ, ສູນ, ຫ້ອງການ ແລະ ພະນັກງານ-ລັດຖະກອນ ໄດ້ເປັນເຈົ້າການຈັດຕັ້ງຜັນຂະຫຍາຍບັນດາ 5 ແຜນງານ 29 ໂຄງການຂອງສະພາແຫ່ງຊາດຕາມພາລະບົດບາດ,ໜ້າທີ່ຄວາມຮັບຜິດຊອບຂອງຕົນດ້ວຍຄວາມຮັບຜິດຊອບສູງເຮັດໃຫ້ວຽກງານຂອງສະພາແຫ່ງຊາດສຳເລັດຕາມແຜນການທີ່ວາງໄວ້ ໂດຍສະເພາະການປະຕິບັດ 3 ພາລະບົດບາດຂອງສະພາແຫ່ງຊາດຄື: ດ້ານນິຕິບັນຍັດ, ການຕົກລົງບັນຫາສຳຄັນຂອງປະເທດຊາດ, ການຕິດຕາມກວດກາການປະຕິບັດລັດຖະທຳມະນູນແລະກົດໝາຍ, ການສ້າງຄວາມເຂັ້ມແຂງ, ວຽກງານການຕ່າງປະເທດ, ວຽກງານການຄຸ້ມຄອງບໍລິຫານ ແລະ ການ ອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຂອງສະພາແຫ່ງຊາດ, ສຳເລັດການຂຽນຕຳແໜ່ງງານພະນັກງານນຳ ພາຄຸ້ມຄອງ ທັງຂັ້ນສູນກາງ ແລະ ຂັ້ນສະພາແຫ່ງຊາດຄຸ້ມຄອງ ເຊິ່ງໄດ້ຖືກຮັບຮອງຈາກຄະນະພັກຂັ້ນເທິງ ແລະ ຄະນະພັກສະພາແຫ່ງຊາດແລ້ວ; ສຳເລັດການປັບປຸງກົງຈັກການຈັດຕັ້ງຂັ້ນກົມ 25 ກົມ, 2 ສູນ ແລະ 1 ຫ້ອງການ ເຊິ່ງກະຊວງພາຍໃນໄດ້ຮັບຮອງເອົາແລ້ວ, ເຊິ່ງທັງໝົດນັ້ນ ຈຶ່ງເຮັດໃຫ້ພະນັກງານຂອງສະພາແຫ່ງຊາດ ໄດ້ຖືກສະ ເໜີໃຫ້ມີການຍ້ອງຍໍໃນລະດັບຕ່າງໆຈຳນວນຫຼວງຫຼາຍ.

ເພື່ອຈັດຕັ້ງປະຕິບັດບັນດາເນື້ອໃນການແຂ່ງຂັນຮັກຊາດ ແລະ ພັດທະນາ ປີ 2024 ໃຫ້ມີຜົນສຳເລັດ, ມີຄຸນນະພາບ ແລະ ມີປະສິດທິຜົນສູງ, ທ່ານຮອງປະທານສະພາແຫ່ງຊາດ ໄດ້ຮຽກຮ້ອງໃຫ້ບັນດາອົງການຈັດຕັ້ງຂອງສະພາແຫ່ງຊາດ ຈົ່ງຍົກສູງຄຸນນະພາບໃນການປະເມີນພະນັກງານປະຈຳປີ ເພື່ອເຮັດໃຫ້ການຕີລາຄາ, ການສະເໜີຍ້ອງຍໍໃນປີ 2024 ມີຄວາມຖືກຕ້ອງກັບຄວາມຫ້າວຫັນບຸກບືນຂອງພະນັກງານ ແລະສາມາດຄັດເລືອກໄດ້ກົມກອງແລະບຸກຄົນທີ່ດີເດັ່ນແທ້ໆເພື່ອເພີ່ມຄວາມເຂັ້ມແຂງແກ່ສະພາແຫ່ງຊາດ.

**(ສອນສັກ ວັນວິໄຊ)**

## ກສຕສ...

(ຕໍ່ຈາກໜ້າ 1)

ການລົງເຄື່ອນຕິດຕາມກວດກາຊຸກຍູ້ການຈັດຕັ້ງປະຕິບັດກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດໃນຄັ້ງນີ້, ທ່ານ ຮສ. ປອ. ລິນຄຳ ດວງສະຫວັນ ພ້ອມດ້ວຍຄະນະ ໄດ້ເຂົ້າພົບການນຳຂອງແຂວງຄຳມ່ວນ ແລະທ່ານເຈົ້າແຂວງສະຫວັນນະເຂດ ເພື່ອລາຍງານຈຸດປະສົງໃນການເຄື່ອນໄຫວເຮັດວຽກຢູ່ພາຍໃນແຂວງ; ພ້ອມດຽວກັນນັ້ນ, ກໍໄດ້ຈັດກອງປະຊຸມເຮັດວຽກຮ່ວມກັບສະພາປະຊາຊົນແຂວງ (ສພຂ) ແລະ ພະແນກການທີ່ກ່ຽວຂ້ອງຂອງສອງແຂວງຄື: ແຜນການແລະການລົງທຶນ, ຊັບພະຍາກອນທຳມະຊາດແລະສິ່ງແວດລ້ອມ, ພະລັງງານ ແລະ ບໍ່ແຮ່, ກະສິກຳ ແລະປ່າໄມ້, ອຸດ ສາຫະກຳ ແລະການຄ້າ, ແລະພະແນກການເງິນ ເພື່ອຮັບຟັງການລາຍງານກ່ຽວກັບການຈັດຕັ້ງປະຕິບັດວຽກງານໂຄງການທົດລອງຂຸດຄົ້ນແຮ່ທາດຕາມຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ວ່າດ້ວຍການອະນຸຍາດການຂຸດຄົ້ນແຮ່ທາດແບບທົດລອງສະບັບເລກທີ 61/ນຍ, ລົງວັນທີ 21/6/2021 ແລະ ການຈັດຕັ້ງປະຕິບັດບັນດາມະຕິຂອງສະພາແຫ່ງຊາດ ເຊິ່ງກອງປະຊຸມໄດ້ຮັບຟັງການລາຍງານຈາກພະແນກການທີ່ກ່ຽວຂ້ອງ ແລະມີການແລກປ່ຽນຄຳຄິດຄຳເຫັນຢ່າງກົງໄປກົງມາເພື່ອຊອກໃຫ້ເຫັນດ້ານດີທີ່ຄວນເສີມຂະຫຍາຍແລະດ້ານອ່ອນຂໍ້ຄົງຄ້າງທີ່ຕ້ອງໄດ້ຊອກຫາວິທີແກ້ໄຂ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນກວ່າເກົ່າ.

ຜ່ານການຮັບຟັງການລາຍງານ, ທ່ານ ຮສ. ປອ. ລິນຄຳ ດວງສະຫວັນ ໃນນາມປະທານກອງປະຊຸມ ໄດ້ມີຄຳເຫັນຊີ້ນຳໃຫ້ພາກສ່ວນກ່ຽວຂ້ອງສືບຕໍ່ຈັດຕັ້ງປະຕິບັດວຽກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ເປັນຕົ້ນ: ການຊຸກຍູ້ການຜະລິດແລະການຫຼຸດຜ່ອນການນຳເຂົ້າ ສຳຄັນແມ່ນຕ້ອງກຳນົດບຸລິມະສິດ ແລະ ທ່າແຮງແຕ່ລະເຂດພາຍໃນຂອງແຂວງ ແລະ ໃນຂົງເຂດວຽກງານແຮ່ທາດ: ຮີບຮ້ອນປະເມີນຜົນການຈັດຕັ້ງປະຕິບັດໂຄງການທົດລອງຂຸດຄົ້ນແຮ່ທາດທີ່ກຳລັງຈັດຕັ້ງປະຕິບັດຢູ່ພາຍໃນແຂວງ ໃຫ້ມີປະສິດທິພາບ, ປະສິດທິຜົນ, ຍືນຍົງ ພ້ອມທັງມີມາດຕະການຢ່າງເຂັ້ມງວດຕໍ່ໂຄງ ການທີ່ບໍ່ມີປະສິດທິຜົນ ຄວນໂຈະ ແລະ ສຳລັບໂຄງການໃດທີ່ມີປະສິດທິຜົນ ຄວນໃຫ້ສືບຕໍ່ຈັດຕັ້ງປະຕິບັດໃຫ້ສຳເລັດໂດຍຫັນເຂົ້າສູ່ການດຳເນີນໂຄງການແບບປົກກະຕິ; ການຄົ້ນຄວ້າອະນຸມັດໂຄງການຂຸດຄົ້ນແຮ່ທາດໃນຕໍ່ໜ້າ ຕ້ອງໃຫ້ສອດຄ່ອງກັບຍຸດທະສາດການພັດທະນາແຮ່ທາດທີ່ສະພາແຫ່ງຊາດໄດ້ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 5 ທີ່ຜ່ານມາ ແລະ ແຈ້ງການຂອງຄະນະເລຂາທິການສະພາແຫ່ງຊາດກ່ຽວກັບການພິຈາລະນາການອະນຸມັດໂຄງການຂຸດຄົ້ນແຮ່ທາດສະບັບເລກທີ 647/ຄລສ, ລົງວັນທີ 27 ທັນວາ 2023. ຂົງເຂດວຽກງານອຸດສາຫະກຳແລະການຄ້າ: ໃຫ້ສືບຕໍ່ຊຸກຍູ້ສົ່ງເສີມການຜະລິດປຸງແຕ່ງສິນຄ້າເພື່ອສົ່ງອອກຜະລິດຕະພັນສຳເລັດຮູບຕ່າງໆ ໃຫ້ມີຄວາມຄ່ອງຕົວ. ຂົງເຂດວຽກງານກະສິກຳ ແລະ ປ່າໄມ້: ເອົາໃຈໃສ່ຄົ້ນຄວ້າ, ປັບປຸງນະໂຍບາຍ ແລະ ນິຕິກຳ ກ່ຽວກັບການສົ່ງເສີມວຽກງານການຟື້ນຟູ ແລະ ປູກໄມ້ ໂດຍການມີສ່ວນຮ່ວມລະຫວ່າງພາກລັດ, ຜູ້ປະກອບການ ແລະ ປະຊາຊົນ ໃຫ້ມີຄວາມຊັດເຈນ ແລະ ຮັດກຸມ; ສ້າງແຜນຟື້ນຟູປ່າ, ປູກໄມ້ທົດແທນ ແລະ ປົກປັກຮັກສາໃນແຕ່ລະຂົງເຂດເພື່ອໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ໃຫ້ມີເນື້ອທີ່ປ່າປົກຫຸ້ມກວມ 70%; ສຸມໃສ່ຕິດຕາມ, ກວດກາ ແລະ ສັງລວມການປະຕິບັດພັນທະຕ່າງໆກ່ຽວກັບວຽກງານຟື້ນຟູປ່າໄມ້ ແລະ ປູກໄມ້ທົດແທນ ຕາມສັນຍາສຳປະທານ, ກົດໝາຍ, ມະຕິສະພາແຫ່ງຊາດ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງ ຂອງບັນດາໂຄງການກໍ່ສ້າງເຂື່ອນໄຟຟ້າ, ບໍ່ແຮ່, ໂຄງລ່າງພື້ນຖານ ທີ່ໄດ້ຮັບອະນຸຍາດຈາກລັດຖະບານໃນໄລຍະຜ່ານມາ. ຂົງເຂດວຽກງານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ: ໃຫ້ສືບຕໍ່ເອົາໃຈໃສ່ສຳຫຼວດ, ວັດແທກ, ຂຶ້ນທະບຽນອອກໃບຕາດິນ ແລະ ການຈັດສັນທີ່ດິນ ບັນລຸຕາມແຜນການທີ່ວາງໄວ້ ພ້ອມທັງສືບຕໍ່ຜັນຂະຫຍາຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມຂັ້ນແຂວງ ໂດຍຕິດພັນກັບການຊຸກຍູ້ຢ່າງແຂງແຮງໃນການຈັດຕັ້ງຜັນຂະຫຍາຍກົດໝາຍວ່າດ້ວຍທີ່ດິນ ເຂົ້າໃນຊີວິດຕົວຈິງໃຫ້ທົ່ວເຖິງ ແລະມີຜົນສັກສິດ; ສືບຕໍ່ຕິດຕາມຢ່າງໃກ້ຊິດບັນຫາຜົນກະທົບຕໍ່ສິ່ງແວດລ້ອມ ສັງຄົມ ແລະທຳມະຊາດ ທີ່ອາດຈະເກີດຂຶ້ນຈາກໂຄງການພັດທະນາຕ່າງໆ ເຊັ່ນ: ໂຄງການພັດທະນາໄຟຟ້າ, ໂຄງການຂຸດຄົ້ນແຮ່ທາດ, ໂຄງການພັດທະນາພື້ນຖານໂຄງລ່າງອື່ນໆ.

ພ້ອມກັນນີ້, ຄະນະຍັງໄດ້ເດີນທາງໄປຢ້ຽມຢາມເຂດພື້ນທີ່ຕົວຈິງຂອງແຂວງຄຳມ່ວນຄື: ໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ໂດຍສະເພາະແຮ່ເກືອໂປຕາສ ຂອງບໍລິສັດ ຊີໂນ ອາກຣີ ໂປຕາສ ພັດທະນາແຮ່ທາດ ຈຳກັດ ແລະ ບໍລິສັດ ລາວຄາຍຢວນ ບໍ່ແຮ່ ຈຳກັດ ຢູ່ເມືອງທ່າແຂກ ແຂວງຄຳມ່ວນ; ໂຄງການຂຸດຄົ້ນແຮ່ເຫຼັກ (ແບບທົດລອງ) ຂອງບໍລິ ສັດ ລາວມີໄຊ ພັດທະນາບໍ່ແຮ່ ຈຳກັດ ທີ່ເມືອງຜົ້ງ ແລະ ໂຄງການບໍ່ຄຳ-ທອງ ເຊໂປນ ຂອງບໍລິສັດ ລ້ານຊ້າງ ມິເນໂຣນສ ທີ່ເມືອງວິລະບູລີ ແຂວງສະຫວັນນະເຂດ.

ໃນໄລຍະທີ່ຄະນະລົງເຄື່ອນໄຫວຕິດຕາມກວດກາ ແລະຊຸກຍູ້ວຽກງານຢູ່ສອງແຂວງ, ທ່ານປະທານ ກສຕສ ໃນນາມຫົວໜ້າຄະນະ ໄດ້ມອບຄອມພິວເຕີທີ່ໄດ້ຮັບການຊ່ວຍເຫຼືອຈາກຄະນະກອງທຶນຊ່ວຍເຫຼືອສັງຄົມຂອງສະພາແຫ່ງຊາດ ໃຫ້ແກ່ ສພຂ ຄຳມ່ວນ ແລະ ສພຂ ສະຫວັນນະເຂດ ພາກສ່ວນລະ 01 ຊຸດ ເພື່ອປະກອບສ່ວນເຂົ້າໃນການປະຕິບັດວຽກງານໃຫ້ມີຄວາມສະດວກວ່ອງໄວຂຶ້ນຕື່ມ.

**(ນັກຂ່າວ ສພຊ)**

## ຜົນສຳເລັດ...

(ຕໍ່ຈາກໜ້າ 1)

ກັບການພົວພັນລະຫວ່າງໄອປາກັບຄູ່ຮ່ວມພາຍນອກ ໂດຍໄດ້ກຳນົດຈຸດປະສົງ, ຂັ້ນຕອນ, ກົນໄກ, ເງື່ອນໄຂ ແລະ ພັນທະກ່ຽວກັບການພົວພັນຮ່ວມມືລະຫວ່າງໄອປາກັບບັນດາປະເທດສັງເກດການ, ອົງການລັດຖະສະພາສາກົນ, ອົງການ ຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາອື່ນໆ ແລະ 2) ຫຼັກການແລະເງື່ອນໄຂກ່ຽວກັບການສ້າງຕັ້ງຫ້ອງສະໝຸດກົດໝາຍດີຈິຕອນຂອງໄອປາ ໂດຍໄດ້ກຳນົດຈຸດປະສົງ, ເປົ້າໝາຍຜູ້ຊົມໃຊ້, ຂອບເຂດການບໍລິການ, ເຕັກນິກ, ຜູ້ໃຫ້ທຶນ ແລະ ການພັດທະນາ.

ຜ່ານການຄົ້ນຄວ້າ ແລະ ປຶກສາຫາລືຮ່ວມກັນເປັນເວລາສອງວັນ ຢ່າງເປັນເຈົ້າການ, ກົງໄປກົງມາ ແລະ ມີຄວາມຮັບຜິດຊອບສູງ, ກອງປະຊຸມໄດ້ເຫັນດີເປັນເອກະພາບຕໍ່ສອງຮ່າງເອກະສານດັ່ງກ່າວ ແລະ ຈະນຳໄປສະເໜີພິຈາລະນາຮັບ ຮອງເອົາໃນກອງປະຊຸມໃຫຍ່ໄອປາຄັ້ງທີ 45 ທີ່ນະຄອນຫຼວງວຽງຈັນ; ໃນກອງປະຊຸມຄັ້ງນີ້, ຍັງໄດ້ປຶກສາຫາລືກ່ຽວກັບການປັບປຸງເນື້ອເພງຂອງໄອປາ ໂດຍກອງເລຂາໄອປາຈະແຕ່ງຕັ້ງຄະນະທີມງານທີ່ປະກອບດ້ວຍພາກສ່ວນຈາກປະເທດອິນໂດເນເຊຍ ແລະ ຟີລິບປິນ ເພື່ອປັບປຸງເນື້ອໃນໃຫ້ມີຄວາມເໝາະສົມ ແລະ ສອດຄ່ອງກັບຍຸກສະໄໝ ແລ້ວລາຍງານຕໍ່ກອງປະຊຸມຄັ້ງຕໍ່ໄປ.

ພ້ອມກັນນີ້, ທ່ານປະທານກຳມາທິການການຕ່າງປະເທດ ຍັງໄດ້ໃຫ້ສຳພາດຕໍ່ລາຍການສຳພາດຂ່າວ AIPACast ເຊິ່ງເປັນລາຍການສື່ທາງອອນລາຍຂອງກອງເລຂາໄອປາ, ໄດ້ສ້າງຕັ້ງຂຶ້ນເພື່ອເຜີຍແຜ່ວຽກງານຂອງໄອປາ ໃຫ້ປະຊາຊົນ ແລະ ພາກສ່ວນຕ່າງໆທົ່ວສັງຄົມອາຊຽນໄດ້ຮັບຮູ້ ແລະເຂົ້າໃຈກ່ຽວກັບບົດບາດ ແລະ ການເຄື່ອນໄຫວຂອງໄອປາ ໃນຖານະອົງການນິຕິບັນຍັດຂອງປະເທດອາຊຽນ ໃຫ້ທົ່ວເຖິງ ແລະ ກວ້າງຂວາງຂຶ້ນ; ນອກຈາກນັ້ນ, ຄະນະຜູ້ແທນສະພາແຫ່ງຊາດລາວ ຍັງໄດ້ຖືໂອກາດປຶກສາຫາລືກັບກອງເລຂາໄອປາ ກ່ຽວກັບການກະກຽມຈັດກອງປະຊຸມຕ່າງໆ ໃນວາລະທີ່ສະພາແຫ່ງຊາດລາວເປັນປະທານໄອປາຕະຫຼອດປີ 2024. ຜົນສຳເລັດຂອງກອງປະຊຸມໃນຄັ້ງນີ້ ເປັນການປະກອບສ່ວນຂອງສະ ພາແຫ່ງຊາດລາວ ໃຫ້ແກ່ການກະກຽມການເປັນເຈົ້າພາບຈັດກອງປະຊຸມໃຫຍ່ໄອປາຄັ້ງທີ 45 ທີ່ນະຄອນຫຼວງວຽງຈັນ.

## ການນຳ...

(ຕໍ່ຈາກໜ້າ 1)

ກະຊວງປ້ອງກັນປະເທດ ໃນວັນທີ 17 ມັງກອນ 2024 ໂດຍໄດ້ຮັບການຕ້ອນຮັບຈາກສະຫາຍ ພົທ. ທອງລອຍ ສິລິວົງ ກຳມະການສູນກາງພັກ, ຮອງລັດຖະມົນຕີ ກະຊວງປ້ອງກັນປະເທດ, ຫົວໜ້າກົມໃຫຍ່ການເມືອງກອງທັບ ພ້ອມດ້ວຍຄະນະພັກ-ຄະນະນຳກະຊວງດັ່ງກ່າວ.

ສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ກ່າວຄຳອວຍພອນອັນອົບອຸ່ນຕໍ່ຄະນະນຳກະຊວງປ້ອງກັນປະເທດ ຕະຫຼອດຮອດພະນັກງານ-ນັກຮົບໃນທົ່ວກອງທັບ ແລະ ຕີລາຄາສູງຕໍ່ຜົນງານ, ການເຕີບໃຫຍ່ຂະຫຍາຍຕົວຂອງກອງທັບປະຊາຊົນລາວ ຕະຫຼອດໄລຍະ 75 ປີຜ່ານມາ; ທັງລະນຶກເຖິງຜົນງານ ແລະຄຸນງາມຄວາມດີຂອງບັນພະບູລຸດ, ພະນັກງານ-ນັກຮົບ ທີ່ໄດ້ເສຍສະຫຼະຊີວິດເລືອດເນື້ອໃນພາລະກິດຕໍ່ສູ້ປົດປ່ອຍຊາດໃນເມື່ອກ່ອນ ກໍຄື ພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນປັດຈຸບັນ.

ສະຫາຍພົທ. ທອງລອຍ ສິລິວົງ ກໍໄດ້ກ່າວຂອບໃຈທີ່ໄດ້ນຳເອົາຄຳອວຍພອນອັນອົບອຸ່ນມາສູ່ກອງທັບ ເຊິ່ງເປັນການປະກອບສ່ວນປຸກລະດົມຊຸກຍູ້ກຳລັງໃຈອັນໃຫຍ່ຫຼວງ ໃຫ້ນາຍ ແລະ ພົນທະຫານໃນທົ່ວກອງທັບ ມີຄວາມຫ້າວຫັນໃນການປະຕິບັດໜ້າທີ່ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດກໍຄືການປັບປຸງກໍ່ສ້າງກອງທັບປະຊາຊົນລາວ ໃຫ້ນັບມື້ເຕີບໃຫຍ່ເຂັ້ມແຂງ ແລະທັນສະໄໝ.

**(ສອນສັກ ວັນວິໄຊ)**

# ຜົ້ງສາລີ ສໍາເລັດການດໍາເນີນກອງປະຊຸມສະໄໝສາມັນເທື່ອທີ 6




(ສພຊ) ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາປະຊາຊົນແຂວງຜົ້ງສາລີ ຊຸດທີ II ໄດ້ອັດລົງດ້ວຍຜົນສໍາເລັດຢ່າງຈົບງາມ, ເຄັ່ງຮ້ອນ, ເຕັມໄປດ້ວຍຄວາມຮັບຜິດຊອບສູງ ແລະ ບັນລຸຜົນສໍາເລັດຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້ ເຊິ່ງໄດ້ດໍາເນີນມາເປັນເວລາ 2 ວັນ ໃນລະຫວ່າງວັນທີ 27-29 ທັນວາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ, ພາຍໃຕ້ການນໍາພາ ແລະ ເປັນປະທານກອງປະຊຸມຂອງທ່ານ ທອງສີ ເສົາສຸລິພົມ ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີ ທ່ານ ຄໍາຜ່ອຍ ວັນນະສານ ເຈົ້າແຂວງໆຜົ້ງສາລີ; ມີທ່ານຮອງເຈົ້າແຂວງ, ບັນດາສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ອົງການປົກຄອງແຂວງ, ແນວລາວສ້າງຊາດແຂວງ, ອົງການຈັດຕັ້ງມະຫາຊົນແຂວງ, ອົງການກວດສອບປະຈໍາພາກເໜືອ, ອົງການຈັດຕັ້ງພັກລັດຂັ້ນແຂວງ, ອະດີດການນໍາແຂວງ, ອະດີດສະມາຊິກສະພາແຫ່ງຊາດ, ຫົວໜ່ວຍທຸລະກິດທັງພາກລັດ ແລະ ເອກະຊົນ.

ກອງປະຊຸມໄດ້ຮັບຟັງການລາຍງານຈາກອົງການປົກຄອງແຂວງ, ອົງການກວດສອບປະຈໍາພາກເໜືອ II, ອົງການກວດກາລັດແຂວງ, ວຽກງານຂອງອົງການໄອຍະການປະຊາຊົນແຂວງ, ສານປະຊາຊົນແຂວງ ແລະ ວຽກງານສະພາປະຊາຊົນແຂວງ ແລະ ໄດ້ຮັບຟັງການຊີ້ແຈງ ຕໍ່ຄໍາຊັກຖາມ ເຊິ່ງສະມາຊິກສະພາປະຊາຊົນແຂວງ ກໍຄືປະຊາຊົນບັນດາເຜົ່າ ໃຫ້ຄວາມສົນໃຈຫຼາຍ ຈາກທ່ານຫົວໜ້າພະແນກອຸດສາຫະກໍາແລະການຄ້າແຂວງ, ຫົວໜ້າການເງິນແຂວງ, ພະແນກຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມແຂວງ, ອົງການກວດກາລັດແຂວງ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ ແລະ ພະແນກຍຸຕິທໍາແຂວງ; ພ້ອມນັ້ນ, ກອງປະຊຸມຍັງໄດ້ຮັບຟັງ ປະທານແນວລາວສ້າງຊາດແຂວງຕາງໜ້າສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນຂັ້ນແຂວງ ຂຶ້ນປະກອບຄໍາເຫັນ ຕໍ່ວຽກງານຂອງສະພາປະຊາຊົນແຂວງ.

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ການປະກອບຄໍາຄິດຄໍາເຫັນຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງຕໍ່ກັບບັນດາເນື້ອໃນຕ່າງໆ ແລະ ຮັບຮອງບັນຫາສໍາຄັນ ອອກເປັນມະຕິ ຈໍານວນ 7 ສະບັບ ມີດັ່ງນີ້:

1) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາ ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈໍາປີ 2023 ແລະ ທິດທາງແຜນການ ປະຈໍາປີ 2024;

2) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາ ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານປະຈໍາປີ2023 ແລະ ທິດທາງແຜນການ ປະຈໍາປີ 2024;

3) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາ ບົດລາຍງານຂອງອົງການກວດສອບປະຈໍາພາກເໜືອກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈໍາປີ2023 ແລະ ທິດທາງແຜນການ ປະຈໍາປີ 2024 ແລະ ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດ ປະຈໍາປີ 2022;

4) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາ ບົດລາຍງານຂອງອົງການກວດກາລັດແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈໍາປີ 2023 ແລະ ແຜນການເຄື່ອນໄຫວວຽກງານ ປະຈໍາປີ 2024, ບົດລາຍງານຜົນການຕິດຕາມກວດກາ ແລະ ແກ້ໄຂຕາມຜົນຂອງການກວດສອບ ປະຈໍາປີ 2021;

5) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາ ບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈໍາປີ2023 ແລະ ທິດທາງແຜນການ ປະຈໍາປີ 2024;

6) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາ ບົດລາຍງານຂອງສານປະຊາຊົນແຂວງກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈໍາປີ 2023 ແລະ ທິດທາງແຜນການ ປະຈໍາປີ 2024;

7) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາ ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈໍາປີ 2023 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈໍາປີ 2024 ຂອງສະພາປະຊາຊົນແຂວງ ຊຸດທີ II.

**(ສູນທອງ)**



# ກອງປະຊຸມຄົບຄະນະຂອງ 3 ຄະນະກໍາມະການ ສະພາປະຊາຊົນແຂວງສະຫວັນນະເຂດ ປະຈໍາປີ 2023

(ສພຊ) ເພື່ອສະຫຼຸບຕີລາຄາ, ຖອດຖອນບົດຮຽນ ແລະ ປະກອບຄໍາເຫັນໃສ່ຮ່າງບົດສະຫຼຸບການເຄື່ອນໄຫວວຽກງານ ປະຈໍາປີ 2023 ແລະ ທິດທາງແຜນການເຄື່ອນໄຫວ ປະຈໍາປີ 2024 ຂອງ 3 ຄະນະກໍາມະການ; ເພື່ອເກັບກໍາຂໍ້ມູນຈາກຄໍາເຫັນຂອງບັນດາກໍາມະການ ແລະ ຜູ້ເຂົ້າຮ່ວມກອງປະຊຸມ ຕໍ່ສະພາບບັນຫາທີ່ພົ້ນເດັ່ນໃນວຽກງານຍຸຕິທໍາ ແລະ ປກຊ-ປກສ, ວຽກງານເສດຖະກິດ, ແຜນການ ແລະການເງິນ;ວຽກງານຊົນເຜົ່າ, ແນວໂຮມ-ສາສະໜາ, ອົງການຈັດຕັ້ງມະຫາຊົນ, ອົງການປົກຄອງທ້ອງຖິ່ນແລະວຽກງານອື່ນທີ່ກ່ຽວຂ້ອງກັບພາລະບົດບາດຂອງ 3 ຄະນະກໍາມະການ ພ້ອມທັງປຶກສາຫາລືທິດທາງແກ້ໄຂ




ໃນຕໍ່ໜ້າ. ໃນວັນທີ 26 ທັນວາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງສະຫວັນນະເຂດໄດ້ມີກອງປະຊຸມຄົບຄະນະຂອງຄະນະກໍາມະການຍຸຕິທໍາແລະປກຊ-ປກສ ໂດຍການເປັນປະທານຂອງທ່ານ ກົງແກ້ວ ມີວໍລະຈັກ ປະທານສະພາປະຊາຊົນແຂວງ, ທີ່ຫ້ອງປະຊຸມພະແນກແຜນການ ແລະ ການລົງທຶນແຂວງ ໄດ້ມີກອງປະຊຸມຄົບຄະນະຂອງຄະນະກໍາມະການເສດຖະກິດ, ແຜນການ ແລະ ການເງິນໂດຍການເປັນປະທານຂອງທ່ານ ຄໍາຜັນ ຄູນສະຫວັນ ຮອງປະທານສະພາປະຊາຊົນແຂວງ ແລະ ທີ່ຫ້ອງປະຊຸມພະແນກແຮງງານແລະສະຫວັດດີການສັງຄົມແຂວງ ໄດ້ມີກອງປະຊຸມຄົບຄະນະຂອງຄະນະກໍາມະການວັດທະນະທໍາ-ສັງຄົມ ແລະ ບັນດາເຜົ່າ ໂດຍການເປັນປະທານຂອງທ່ານ ນາງ ພູທອນ ແກ້ວພູວົງ ຮອງປະທານສະພາປະຊາຊົນແຂວງ ເຂົ້າຮ່ວມມີບັນດາປະທານ-ຮອງປະທານຄະນະກໍາມະການ, ບັນດາສະມາຊິກສະພາປະຊາຊົນແຂວງທີ່ສັງກັດຢູ່ໃນ 3 ຄະນະກໍາມະການ ພ້ອມດ້ວຍແຂກຖືກເຊີນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ກອງປະຊຸມໄດ້ຮັບຟັງການສະຫຼຸບລາຍງານການເຄື່ອນໄຫວວຽກງານປະຈໍາປີ 2023 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈໍາປີ 2024 ຂອງ 3 ຄະນະກໍາມະການ; ບາງເນື້ອໃນກ່ຽວກັບບົດບາດ ແລະ ກົນໄກການປະສານງານຂອງທັງ 3 ຄະນະກໍາມະການ ກັບຂະແໜງການແລະອົງການທີ່ກ່ຽວຂ້ອງ; ບົດປະກອບຄໍາເຫັນຂອງຄະນະກໍາມະການ ເຊິ່ງໄດ້ຍົກເອົາບົດຮຽນປະສົບການທີ່ສໍາຄັນດ້ານຕ່າງໆຢູ່ທ້ອງຖິ່ນປະຈໍາເຂດເລືອກຕັ້ງຂອງຕົນ, ເພື່ອມາແລກປ່ຽນໃນກອງປະຊຸມ, ພ້ອມກັນນັ້ນກໍໄດ້ຮັບຟັງບົດປະກອບຄໍາເຫັນຂອງພະແນກການທີ່ກ່ຽວຂ້ອງຢູ່ພາຍໃນແຂວງ.

ໃນຕອນທ້າຍກອງປະຊຸມໄດ້ຮັບຟັງການໂອ້ລົມ, ໃຫ້ທິດຊີ້ນໍາ ຂອງບັນດາທ່ານປະທານກອງປະຊຸມ ເຊິ່ງໄດ້ຕີລາຄາສູງຕໍ່ບົດສະຫຼຸບຜົນງານການເຄື່ອນໄຫວວຽກງານ ປະຈໍາປີ 2023 ຂອງຄະນະກໍາມະການ, ເຫັນວ່າໃນໄລຍະ 1 ປີຜ່ານມາ ເຖິງວ່າປະເທດເຮົາຈະພົບກັບຄວາມຫຍຸ້ງຍາກຫຼາຍປະການແຕ່ທັງ 3 ຄະນະກໍາມະການ ກໍມີຄວາມພະຍາຍາມສູງປະຕິບັດໜ້າທີ່ການເມືອງຂອງຕົນສໍາເລັດເປັນຢ່າງດີ ໂດຍສະເພາະແມ່ນການປະຕິບັດໜ້າທີ່ຕິດຕາມກວດກາການຈັດຕັ້ງປະຕິບັດແຜນງານ, ໂຄງການຈຸດສຸມຂອງສູນກາງ ແລະ ທ້ອງຖິ່ນ, ຕິດຕາມກວດກາຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ແລະສິ່ງແວດລ້ອມ ຈາກໂຄງການພັດທະນາຕ່າງໆ ແລະ ບາງບັນຫາທີ່ພົ້ນເດັ່ນ ພ້ອມທັງປະສານສົມທົບກັບພະແນກການທີ່ກ່ຽວຂ້ອງ ໃນການເຄື່ອນໄຫວວຽກງານວິຊາສະເພາະຂອງຕົນມີຜົນສໍາເລັດດີພໍສົມຄວນ. ພ້ອມນັ້ນ,ຍັງໄດ້ເນັ້ນບາງບັນຫາເພື່ອຮັບປະກັນໃຫ້ການເຄື່ອນໄຫວວຽກງານໃນຕໍ່ໜ້າມີປະສິດທິພາບ ແລະປະສິດທິຜົນດີຂຶ້ນກວ່າເກົ່າ ເປັນຕົ້ນ:ເພີ່ມຄວາມເອົາໃຈໃສ່ວຽກງານໂຄສະນາ-ສຶກສາອົບຮົມປະຊາຊົນຕາມແນວທາງຂອງພັກ, ລັດຖະທໍາມະນູນ,ກົດໝາຍແລະນິຕິກໍາໃຕ້ກົດໝາຍ ເພື່ອຮັກສາໄດ້ມູນເຊື້ອຄວາມສາມັກຄີປອງດອງພາຍໃນຊາດ; ສາມາດປະຕິບັດສິດ ແລະ ໜ້າທີ່ຂອງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ ກໍຄືພາລະບົດບາດຂອງຄະນະກໍາມະການເປັນຕົ້ນແມ່ນການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດລັດຖະທໍາມະນູນ, ກົດໝາຍໃນຂົງເຂດຂອງຕົນຮັບຜິດຊອບ, ການຕິດຕາມກວດກາໂຄງການທີ່ມີຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ແລະ ສິ່ງແວດລ້ອມ ຈາກການສະເໜີຂອງພໍ່ແມ່ປະຊາຊົນ, ຈາກສາຍດ່ວນຂອງສະພາປະຊາຊົນແຂວງ, ຈາກທາງສຽງຂອງສັງຄົມ, ຈາກການລາຍງານ ແລະ ສະເໜີຂອງອົງການຈັດຕັ້ງ. ຜ່ານມາຄະນະກໍາມະການທັງສາມ ໄດ້ສົມທົບກັບຄະນະສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງປະຈໍາເຂດເລືອກຕັ້ງເມືອງ-ນະຄອນ, ໄດ້ລົງຕິດຕາມກວດກາ ແລະ ເຫັນຜົນກະທົບຕົວຈິງຕໍ່ປະຊາຊົນ ແລະ ສິ່ງແວດລ້ອມແທ້, ແຕ່ຂອດຂອງການແກ້ໄຂຂອງພາກສ່ວນກ່ຽວຂ້ອງ ນັບທັງທ້ອງຖິ່ນ ແມ່ນຊັກຊ້າ ແລະ ບໍ່ດີເທົ່າທີ່ຄວນ. ອັນນີ້ ແມ່ນເນັ້ນແລ້ວເນັ້ນອີກ ທຸກຄໍາສະເໜີຂອງປະຊາຊົນ ຕ້ອງໄດ້ຮັບການແກ້ໄຂແລະຕ້ອງແຈ້ງຜົນຂອງການແກ້ໄຂດັ່ງກ່າວໃຫ້ປະຊາຊົນຮັບຊາບແລະຕ້ອງເພີ່ມທະວີຄວາມໃກ້ຊິດຕິດແທດໃນການແກ້ໄຂຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ຕົ້ນຕໍແມ່ນໃຫ້ເຂົາເຈົ້າເຂົ້າໃຈຈຸດປະສົງຂອງການພັດທະນາ ແລະ ມີສ່ວນຮ່ວມຢ່າງຕັ້ງໜ້າ, ຍົກສູງຄຸນນະພາບກົນໄກປະສານງານ ແລະ ການສ່ອງແສງລາຍງານສະພາບທີ່ພົ້ນເດັ່ນໃນແຕ່ລະໄລຍະຕ້ອງວ່ອງໄວ ແລະ ທັນການ.

**(ນັກຂ່າວ ສພຂ)**

# ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງອຸດົມໄຊ ຊຸດທີ II




(ສພຊ) ໃນວັນທີ 9 ມັງກອນ 2024, ທີ່ສະໂມສອນແຂວງອຸດົມໄຊ ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງອຸດົມໄຊ ຊຸດທີ II ໄດ້ໄຂຂຶ້ນຢ່າງເປັນທາງການ; ໂດຍພາຍໃຕ້ການເປັນປະທານຂອງທ່ານ ຄຳດີ ວົງລ້ອມ ປະທານສະພາປະຊາຊົນແຂວງ, ມີທ່ານ ບຸນຄົງ ຫຼ້າຈຽມພອນ ເຈົ້າແຂວງອຸດົມໄຊ; ມີຮອງເຈົ້າແຂວງ, ບັນດາຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ເຈົ້າເມືອງ 7 ເມືອງ; ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າພະແນກ; ບັນດາອະດີດສະມາຊິກສະພາແຫ່ງຊາດ, ອະດີດສະມາຊິກສະພາປະຊາຊົນແຂວງ, ອະດີດການນຳແຂວງ, ແນວລາວສ້າງຊາດແຂວງ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນແຂວງ, 2 ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບແຂວງ, ບັນດາທະນາຄານທຸລະກິດ ແລະ ແຂກຖືກເຊີນ ເຂົ້າຮ່ວມທັງໝົດ 163 ທ່ານ, ຍິງ 39 ທ່ານ.

ໃນກອງປະຊຸມ, ທ່ານ ຄຳດີ ວົງລ້ອມ ໄດ້ມີຄຳເຫັນກ່າວໄຂກອງປະຊຸມວ່າ: ກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II ບັນດາທ່ານສະມາຊິກສະພາປະຊາຊົນແຂວງ ຈະໄດ້ສຸມໃສ່ຄົ້ນຄວ້າພິຈາລະນາແລະຕົກລົງບັນຫາສຳຄັນພື້ນຖານຂອງແຂວງ ຄື: ບົດລາຍງານໂດຍສັງເຂບຂອງທ່ານເຈົ້າແຂວງ ກ່ຽວກັບວຽກງານການບໍລິຫານລັດ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024; ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024; ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດໄລຍະຜ່ານມາ(2021-2023) ຂອງແຂວງອຸດົມໄຊ; ບົດລາຍງານສະພາບການເຄື່ອນໄຫວພົ້ນເດັ່ນ, ບັນຫາທີ່ເປັນຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ຂອງພະແນກການຈຳນວນໜຶ່ງຕາມຄຳຖາມເຈາະຈີ້ມ; ບົດລາຍງານການເຄື່ອນໄຫວວຽກງານຂອງອົງການກວດສອບປະຈຳພາກເໜືອ II ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ແລະ ຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2022; ບົດລາຍງານການເຄື່ອນໄຫວວຽກງານ ຂອງອົງການກວດກາລັດແຂວງ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ແລະ ການກວດກາຕາມຜົນການກວດສອບ ປະຈຳປີ 2021; ບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ ແລະສານປະຊາຊົນແຂວງກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024; ບົດລາຍງານຂອງຄະນະປະຈຳສະພາປະຊາຊົນແຂວງ ກ່ຽວກັບການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະທິດທາງແຜນການປະຈຳປີ 2024 ຂອງສະພາປະຊາຊົນແຂວງອຸດົມໄຊ ຊຸດທີ II; ພິຈາລະນາ, ຮັບຮອງເອົາການສ້າງນິຕິກຳໃຕ້ກົດໝາຍ ຈຳນວນ 4 ສະບັບຄື: ຮ່າງຂໍ້ຕົກລົງ ວ່າດ້ວຍ ການຄຸ້ມຄອງ ແລະ ນຳໃຊ້ຊົນລະປະທານ ຢູ່ແຂວງອຸດົມໄຊ; ຮ່າງຂໍ້ຕົກລົງ ວ່າດ້ວຍ ລາຄາຫົວໜ່ວຍທົດແທນຄ່າເສຍຫາຍຈາກໂຄງການພັດທະນາຕາມແລວທາງເສດຖະກິດອາຊີຕາເວັນອອກສຽງໃຕ້ ເພື່ອການເຊື່ອມໂຍງ-ເຊື່ອມຈອດ ຢູ່ແຂວງອຸດົມໄຊ; ຮ່າງຂໍ້ຕົກລົງວ່າດ້ວຍລາຄາຫົວໜ່ວຍນ້ຳປະປາຢູ່ແຂວງອຸດົມໄຊ ແລະ ຮ່າງຂໍ້ຕົກລົງ ວ່າດ້ວຍການມອບ ແລະ ຖອນສິດນຳໃຊ້ທີ່ດິນຂອງລັດຢູ່ແຂວງອຸດົມໄຊ ແລະ ຈະໄດ້ຮັບຟັງການປະກອບຄຳເຫັນຈາກຄະນະປະຈຳສະພາປະຊາຊົນແຂວງ, ຂອງປະທານແນວລາວສ້າງຊາດແຂວງ, ບັນດາທ່ານສະມາຊິກສະພາປະຊາຊົນແຂວງ.ພ້ອມນັ້ນ, ກອງປະຊຸມຍັງຈະໄດ້ຮັບຟັງການຊີ້ແຈງຂອງພາກສ່ວນກ່ຽວຂ້ອງຈຳນວນໜຶ່ງຕໍ່ຄຳຊັກຖາມຂອງບັນດາສະມາຊິກສະພາປະຊາຊົນແຂວງ ຕື່ມອີກ.

ປະທານກອງປະຊຸມ, ໄດ້ຮຽກຮ້ອງມາຍັງບັນດາທ່ານສະມາຊິກສະພາປະຊາຊົນແຂວງ ຊຸດທີ II ຈົ່ງໄດ້ຍົກສູງຄວາມຮັບຜິດຊອບທາງການເມືອງ, ສຸມທຸກສະຕິປັນຍາ, ຄວາມຮູ້ຄວາມສາມາດຂອງຕົນເຂົ້າໃນການຄົ້ນຄວ້າ, ພິຈາລະນາປະກອບຄຳເຫັນຢ່າງເລິກເຊິ່ງ ແລະ ມີຈຸດສຸມ ເຂົ້າໃສ່ແຕ່ລະເນື້ອໃນທີ່ນຳມາພິຈາລະນາ, ຮັບປະກັນຄວາມຖືກຕ້ອງສອດຄ່ອງກັບແນວທາງນະໂຍບາຍຂອງພັກ-ລັດ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຢ່າງສ້າງສັນ, ພາວະວິໄສ ແລະ ຄົບຖ້ວນ.

**(ນັກຂ່າວ ສພຊ)**




# ຖະແຫຼງຂ່າວຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງວຽງຈັນ



(ສພຊ) ວັນທີ 5 ມັງກອນ 2024 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງວຽງຈັນ ທ່ານ ນາງ ໃສແສງຈັນ ແສງພະຈັນ ຮອງເລຂາທິການສະພາປະຊາຊົນແຂວງວຽງຈັນ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນຂອງແຂວງວ່າ: ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງວຽງຈັນ ຊຸດທີ II ໄດ້ໄຂຂຶ້ນຢ່າງເປັນທາງການ ເລີ່ມແຕ່ວັນທີ 26 ຫາ 29 ທັນວາ 2023 ທີ່ສະໂມສອນໃຫຍ່ຫ້ອງວ່າການແຂວງວຽງຈັນ ໂດຍການເປັນປະທານຂອງທ່ານບຸນສອນ ເພັດລາວັນ ປະທານສະພາປະຊາຊົນແຂວງວຽງຈັນ, ກອງປະຊຸມໄດ້ຮັບຕ້ອນການເຂົ້າຮ່ວມຂອງທ່ານ ຄຳພັນ ສິດທິດຳພາ ເລຂາພັກແຂວງ, ເຈົ້າແຂວງໆວຽງຈັນ, ມີສະມາຊິກສະພາແຫ່ງຊາດ ຊຸດທີ VII ປະຈຳເຂດເລືອກຕັ້ງທີ 10, ສະມາຊິກສະພາປະຊາຊົນແຂວງ, ເຈົ້າເມືອງ-ຮອງເຈົ້າເມືອງ, ຫົວໜ້າພະແນກການ, ອົງການ, ກົມກອງ ເຂົ້າຮ່ວມທັງໝົດ 93 ທ່ານ, ຍິງ 17 ທ່ານ.

ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງວຽງຈັນ ຊຸດທີ II ໄດ້ດຳເນີນໄປດ້ວຍບັນຍາກາດທີ່ຟົດຟື້ນ ແລະ ເສີມຂະຫຍາຍສິດປະຊາທິປະໄຕ, ຕະຫຼອດໄລຍະ 4 ວັນ, ສະມາຊິກສະພາປະຊາຊົນແຂວງວຽງຈັນ ໄດ້ຍົກສູງຄວາມຮັບຜິດຊອບທາງດ້ານການເມືອງຂອງຕົນ, ສຸມທຸກສະຕິປັນຍາເຂົ້າໃນການຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງ ເອົາບັນຫາສຳຄັນຕ່າງໆຂອງແຂວງດ້ວຍຄວາມເປັນເອກະພາບສູງ ເຊິ່ງສາມາດພິຈາລະນາ ແລະຮັບຮອງເອົາວຽກງານສຳຄັນ7ເນື້ອໃນໄດ້ດັ່ງນີ້:

1) ພິຈາລະນາ ແລະຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງປະຈຳປີ 2023 ແລະທິດທາງແຜນການປະຈຳ ປີ 2024;

2) ພິຈາລະນາ ແລະຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024;

3) ພິຈາລະນາ ແລະຮັບຮອງເອົາບົດລາຍງານຂອງອົງການກວດສອບປະຈຳພາກກາງ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝ 5 ປີ (2021-2025) ແລະ ທິດທາງແຜນການທ້າຍສະໄໝຮອດປີ2025; ການຈັດຕັ້ງປະຕິບັດວຽກງານປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024;

4) ພິຈາລະນາ ແລະຮັບຮອງເອົາບົດລາຍງານຂອງອົງການກວດກາລັດແຂວງວຽງຈັນ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານກາງສະໄໝ 5 ປີ (2021-2025) ທິດທາງແຜນການທ້າຍສະໄໝຮອດປີ 2025; ການຈັດຕັ້ງປະຕິບັດແຜນການປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024;

5) ພິຈາລະນາ ແລະຮັບຮອງເອົາບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານປະຈຳປີ2023ແລະທິດທາງແຜນການປະຈຳປີ 2024;

6) ພິຈາລະນາ ແລະຮັບຮອງເອົາບົດລາຍງານຂອງສານປະຊາຊົນແຂວງກ່ຽວກັບການຈັດຕັ້ງປະຕິບັດວຽກງານປະຈຳປີ 2023 ແລະທິດທາງແຜນການປະຈຳປີ 2024;

7) ພິຈາລະນາ ແລະຮັບຮອງເອົາບົດລາຍງານຂອງສະພາປະຊາຊົນແຂວງກ່ຽວກັບການເຄື່ອນໄຫວວຽກງານປະຈຳປີ 2023 ແລະທິດທາງແຜນການປະຈຳປີ 2024;

ນອກຈາກການພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຂອງທ້ອງຖິ່ນ ກອງປະຊຸມຍັງໄດ້ຮັບຟັງການລາຍງານໃນການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດຄື: ບົດລາຍງານການຈັດຕັ້ງປະຕິບັດການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ກອງປະຊຸມໄດ້ຮັບຟັງການການປະກອບຄຳເຫັນຂອງສະມາຊິກສະພາປະຊາຊົນແຂວງ ແລະ ການຊີ້ແຈງຂອງພະແນກການກ່ຽວຂ້ອງຕໍ່ຄຳຊັກຖາມຂອງສະມາຊິກສະພາປະຊາຊົນແຂວງທີ່ໃຫ້ຄວາມສົນໃຈ.

ໃນໄລຍະດຳເນີນກອງປະຊຸມຄັ້ງນີ້, ໄດ້ມີປະຊາຊົນສົ່ງຄຳຄິດ, ຄຳເຫັນ ເປັນຄຳສະເໜີຜ່ານໂທລະສັບສາຍດ່ວນ (023 156) ຈຳນວນ 2 ສາຍ, ມີ 2 ຄຳສະເໜີ ເຊິ່ງຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງເປັນຕົ້ນ: ພະແນກພະລັງງານບໍ່ແຮ່, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

ອີກເທື່ອໜຶ່ງຕາງໜ້າຄະນະປະຈຳສະພາປະຊາຊົນແຂວງວຽງຈັນ, ຂໍສະແດງຄວາມຂອບໃຈມາຍັງບັນດາທ່ານພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ສື່ມວນຊົນ, ກຳມະກອນ-ຊາວຜູ້ອອກແຮງງານ ແລະ ປະຊາຊົນລາວບັນດາເຜົ່າທົ່ວແຂວງວຽງຈັນ ທີ່ໄດ້ໃຫ້ການຕິດຕາມການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງວຽງຈັນ ຊຸດທີ II ໃນຄັ້ງນີ້.

ບໍລິສັດ ກຸ່ມດວງຈະເລີນ ພັດທະນາກໍ່ສ້າງ ຈຳກັດຜູ້ດຽວ
DDC Group Sole Co.,Ltd
Douang Chaleurn Development Construction Group Sole Co.,Ltd

# ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງສາລະວັນ



(ສພຊ) ຄະນະປະຈຳສະພາປະຊາຊົນແຂວງສາລະວັນເປີດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານປະຈຳເດືອນທັນວາ 2023 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳເດືອນ ມັງກອນ 2024; ໃນວັນທີ 29 ທັນວາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໂດຍການເປັນປະທານກອງປະຊຸມຂອງທ່ານ ສີເຮັງ ຫອມສົມບັດ ປະທານຄະນະປະຈຳສະພາປະຊາຊົນແຂວງ, ເຂົ້າຮ່ວມມີທ່ານ ຂັນໄຊ ລັດຖະເຮົ້າ ຮອງປະທານຄະນະປະຈຳສະພາປະຊາຊົນແຂວງ, ມີບັນດາຄະນະປະຈຳ, ຄະນະກຳມະການ, ຄະນະເລຂາທິການ ຕະຫຼອດຮອດຫົວໜ້າ-ຮອງຫົວໜ້າຂະແໜງ.

ທ່ານ ຈັນທະລາດ ສີສຸພົນ ຮອງເລຂາທິການສະພາປະຊາຊົນແຂວງ ໄດ້ສະເໜີຜ່ານຮ່າງບົດສະຫຼຸບ ການເຄື່ອນໄຫວວຽກງານຂອງຄະນະປະຈຳສະພາປະຊາຊົນແຂວງສາລະວັນ ປະຈຳເດືອນທັນວາ 2023 ໂດຍລວມແມ່ນຈັດຕັ້ງປະຕິບັດຕາມ 3 ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາປະຊາຊົນຂັ້ນແຂວງ ໂດຍສະເພາະດ້ານນິຕິກຳ, ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ ແລະ ດ້ານການຕິດຕາມ-ກວດກາ ສາມາດມີຜົນສຳເລັດຕາມຄາດໝາຍທີ່ວາງໄວ້ທັງນີ້, ຍ້ອນຄວາມເປັນເຈົ້າການບຸກບືນເອົາໃຈໃສ່ຊີ້ນຳ-ນຳພາວຽກງານຮອບດ້ານ ຂອງຄະນະປະຈຳສະພາປະຊາຊົນແຂວງແລະມີຄວາມສາມັກຄີເປັນເອກະພາບພາຍໃນ ຈຶ່ງເຮັດໃຫ້ວຽກງານຫຼາຍດ້ານມີຜົນສຳເລັດ, ມີການກຳນົດແຜນການເຄື່ອນໄຫວວຽກງານຂອງຕົນ ຢ່າງເປັນລະບົບຕໍ່ເນື່ອງໃນແຕ່ລະເດືອນລະອຽດ, ມີລະບອບການສ່ອງແສງລາຍງານຢ່າງເປັນປົກກະຕິ, ມີການຮ່ວມມືສະໜັບສະໜູນຈາກສະພາແຫ່ງຊາດ ແລະ ອຳນາດການປົກຄອງຂັ້ນຕ່າງໆຂອງແຂວງ ເພື່ອສ້າງສິ່ງເອື້ອອຳນວຍຄວາມສະດວກໃນການເຄື່ອນໄຫວປະຕິບັດໜ້າທີ່ວຽກງານ.

ພ້ອມດຽວກັນ, ຄະນະປະຈຳສະພາປະຊາຊົນແຂວງ ໄດ້ກຳນົດແຜນວຽກທີ່ສຳຄັນ ເພື່ອສືບຕໍ່ເຄື່ອນໄຫວວຽກງານ ປະຈຳເດືອນ ມັງກອນ 2024 ປະກອບມີ: ສືບຕໍ່ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການກະກຽມຫົວຂໍ້ນິຕິກຳໃຕ້ກົດໝາຍ ຈຳນວນ 2 ສະບັບທີ່ຈະນຳເຂົ້າຄົ້ນຄ້ວາພິຈາລະນາ ແລະ ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງສາລະວັນ ຊຸດທີ II; ສືບຕໍ່ປະສານສົບທົບ ກັບອົງການປົກຄອງແຂວງ ກຽມຄົ້ນຄ້ວາພິຈາລະນາ, ຮັບຮອງເອົາການແຕ່ງຕັ້ງບຸກຄະລາກອນຂອງແຂວງ ຕາມການສະເໜີຂອງແຂວງ; ກະກຽມຄວາມພ້ອມເປີດກອງປະຊຸມຄົບຄະນະ ປະຈຳປີ2023 ຂອງຄະນະກຳມະການໃຫ້ສຳເລັດກ່ອນເປີດກອງປະຊຸມສະໄໝສາມັນເທື່ອທີ 6; ກະກຽມຄວາມພ້ອມຮອບດ້ານໃຫ້ແກ່ການເປີດ ແລະ ດຳເນີນກອງປະຊຸມປະຈຳປີ 2023 ຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 14 ແລະ ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງສາລະວັນ ຊຸດທີ II.

**(ກິລຳພົນ ພົມມະຈັນ)**

# ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງຫົວພັນ ໄດ້ພິຈາລະນາຫຼາຍບັນຫາສຳຄັນ



(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງຫົວພັນ ຊຸດທີ II ດຳເນີນມາແຕ່ວັນທີ 2-4 ມັງກອນ 2024 ລວມເປັນເວລາ 3 ວັນເຕັມ; ພາຍໃຕ້ການເປັນປະທານ ຂອງທ່ານ ນາງ ອຳໄພວອນ ລ້ອມບຸນແພງ ປະທານສະພາປະຊາຊົນແຂວງຫົວພັນ ເຂົ້າຮ່ວມມີທ່ານ ຄຳແພງ ໄຊສົມແພງເຈົ້າແຂວງໆຫົວພັນ, ມີບັນດາຄະນະປະຈຳພັກແຂວງ; ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ອະດີດການນຳພັກ-ລັດ, ຕາງໜ້າແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ພະແນກການອ້ອມຂ້າງແຂວງ, ສອງກອງບັນຊາການ, ພາກສ່ວນທຸລະກິດ ແລະ ແຂກຖືກເຊີນ.

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ການປະກອບຄຳເຫັນ ຂອງບັນດາສະມາຊິກສະພາປະຊາຊົນແຂວງ ຕໍ່ກັບບັນດາເນື້ອໃນຕ່າງໆ ໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນມີດັ່ງນີ້:

1) ພິຈາລະນາ ແລະ ຮັບຮອງເອົາ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງແຂວງຫົວພັນ;

2) ພິຈາລະນາ ແລະ ຮັບຮອງເອົາ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງປະຈຳປີ2023ແລະທິດທາງແຜນການ ປະຈຳປີ 2024 ຂອງແຂວງຫົວພັນ;

3) ພິຈາລະນາ ແລະ ຮັບຮອງເອົາ ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໄລຍະ 3 ປີຜ່ານມາ (2021-2023) ຢູ່ແຂວງຫົວພັນ;

4) ພິຈາລະນາ ແລະ ຮັບຮອງເອົາການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດໄລຍະ 3 ປີຜ່ານມາ (2021-2023) ຢູ່ແຂວງຫົວພັນ;

5) ພິຈາລະນາ ແລະ ຮັບຮອງເອົາ ການຕັ້ງຊື່ຖະໜົນຫົນຕ່າງໆພາຍໃນເທສະບານເມືອງຊຳເໜືອ ແຂວງຫົວພັນ;

6) ພິຈາລະນາ ແລະ ຮັບຮອງເອົາ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2023, ທິດທາງແຜນການ ເຄື່ອນໄຫວວຽກງານ ປະຈຳປີ 2024 ຂອງອົງການກວດສອບປະຈຳພາກເໜືອ ແລະ ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ 2022 ຂອງແຂວງຫົວພັນ;

7) ພິຈາລະນາ ແລະ ຮັບຮອງເອົາ ບົດລາຍງານ ການຈັດຕັ້ງເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024 ຂອງອົງການກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງຂອງແຂວງຫົວພັນ;

8) ພິຈາລະນາ ແລະ ຮັບຮອງເອົາການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງອົງການໄອຍະການປະຊາຊົນ ແລະ ສານປະຊາຊົນແຂວງຫົວພັນ;

9) ພິຈາລະນາ ແລະ ຮັບຮອງເອົາ ການເຄື່ອນໄຫວວຽກງານ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງສະພາປະຊາຊົນແຂວງຫົວພັນ;

ນອກຈາກນີ້, ກອງປະຊຸມຍັງໄດ້ຮັບຟັງການຊີ້ແຈງ ຕໍ່ບັນຫາພົ້ນເດັ່ນຕ່າງໆ ທີ່ສັງຄົມກໍຄືປະຊາຊົນບັນດາເຜົ່າໃນທົ່ວແຂວງ ມີຄວາມສົນໃຈ ຈາກທ່ານເຈົ້າແຂວງ, ບັນດາພະແນກການທີ່ກ່ຽວຂ້ອງຂອງແຂວງ, ຫົວໜ້າອົງການໄອຍະການປະຊາຊົນແຂວງ, ປະທານສານປະຊາຊົນແຂວງ, ສອງກອງບັນຊາການ ແລະ ຄະນະປະຈຳສະພາປະຊາຊົນແຂວງ.

ຜົນສຳເລັດຂອງກອງປະຊຸມຄັ້ງນີ້, ຖືເປັນໝາກຜົນແຫ່ງການເສີມຂະຫຍາຍສະຕິປັນຍາລວມໝູ່ ໃນອົງການອຳນາດລັດທຸກຂັ້ນຂອງແຂວງ ກໍຄືການຍົກສູງຄວາມຮັບຜິດຊອບຄວາມເປັນເຈົ້າການ ຂອງບັນດາທ່ານສະມາຊິກສະພາປະຊາຊົນແຂວງເຂົ້າໃນການຄົ້ນຄວ້າ ແລະ ພິຈາລະນາ ຮັບຮອງເອົາແຕ່ລະເນື້ອໃນສຳຄັນທີ່ນຳມາພິຈາລະນາໃນກອງປະຊຸມຄັ້ງນີ້ ບົນພື້ນຖານຍຶດໝັ້ນຕໍ່ສິດ ແລະ ຜົນປະໂຫຍດລວມຂອງຊາດ ແລະ ຂອງປະຊາຊົນບັນດາເຜົ່າໃນທົ່ວແຂວງຫົວພັນ ດ້ວຍບັນຍາກາດອັນຟົດຟື້ນ, ເຄັ່ງຮ້ອນແລະມີຜົນສຳເລັດຢ່າງຈົບງາມ.

**(ນັກຂ່າວ ສພຂ)**

# ຕິດຕາມກວດກາ ໂຄງການຂຸດຄົ້ນບໍ່ຖ່ານຫີນຢູ່ເມືອງວຽງພູຄາ



(ສພຊ) ໃນລະຫວ່າງວັນທີ 25-27 ທັນວາ 2023 ຜ່ານມາ, ສະພາປະຊາຊົນແຂວງຫຼວງນ້ຳທາ ໄດ້ເຄື່ອນໄຫວຕິດຕາມກວດກາໂຄງການຂຸດຄົ້ນບໍ່ຖ່ານຫີນ ຂອງບໍລິສັດບົວໄລ ມັງກອນທອງ ຂຸດຄົ້ນບໍ່ຖ່ານຫີນ ຈຳກັດຜູ້ດຽວ ຢູ່ເມືອງວຽງພູຄາ ແຂວງຫຼວງນ້ຳທາ ເຊິ່ງນຳໂດຍ ທ່ານ ຄຳພອນ ເຕີ່ມຈະເລີນ ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ແລະ ທ່ານ ພັທ. ບຸນສົມ ທຳມະວົງ ຮອງປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ພ້ອມດ້ວຍຄະນະ, ມີສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງວຽງພູຄາ, ບັນດາພະແນກການທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ, ອຳນາດການປົກຄອງບ້ານ ແລະ ປະຊາຊົນເຂົ້າຮ່ວມທັງໝົດ 125 ທ່ານ ຍິງ 48 ທ່ານ.

ໃນໂອກາດດຽວກັນນີ້, ຍັງໄດ້ຈັດກອງປະຊຸມຮ່ວມກັບອົງການປົກຄອງເມືອງວຽງພູຄາ ເຂົ້າຮ່ວມໂດຍມີທ່ານ ບຸນຊົງ ວາໄຊຢີ ເຈົ້າເມືອງເມືອງວຽງພູຄາ, ທ່ານ ສົມຫວັງ ນາບຸນແພງ ຫົວໜ້າພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ມີສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ, ຄະນະຄຸ້ມຄອງຂັ້ນເມືອງ, ຜູ້ຕາງໜ້າບໍລິສັດບົວໄລມັງກອນທອງ, ໃນກອງປະຊຸມໄດ້ຮັບຟັງການລາຍງານກ່ຽວກັບສະພາບການຈັດຕັ້ງປະຕິບັດໂຄງການໃນໄລຍະຜ່ານມາຂອງຄະນະຄຸ້ມຄອງໂຄງການຂັ້ນເມືອງ, ຮັບຟັງການລາຍງານກ່ຽວກັບສະພາບການອ່າຍແລວນ້ຳເງິນຂອງບໍລິສັດບົວໄລມັງກອນທອງ ເປັນຕົ້ນແມ່ນ ດຳເນີນຜົນການແກ້ໄຂຜົນກະທົບ, ສິ່ງປຸກສ້າງ, ພືນລະປູກ ແລະ ເນື້ອທີ່ດິນ, ການແກ້ໄຂການແຍກຍ້າຍແລວສາຍສົ່ງໄຟຟ້າ ເຂດພື້ນທີ່ສຳປະທານ ບໍລິສັດດັ່ງກ່າວ, ການດຳເນີນການແກ້ໄຂແລວນ້ຳເງິນໃໝ່ມີຄວາມຍາວທັງໝົດ 750 ແມັດ, ການແກ້ໄຂບັນຫາຄຣິບວິດີໂອລົງໂຊຊ່ຽວ (ສື່ອອນລາຍ), ດຳເນີນການແກ້ໄຂ 4 ຄອບຄົວທີ່ບໍລິສັດໄດ້ສະເໜີໃໝ່ ແລະ ອື່ນໆ.

ຈຸດປະສົງຂອງການລົງເຄື່ອນໄຫວໃນຄັ້ງນີ້, ແມ່ນເພື່ອຕິດຕາມກວດກາຄືນການຈັດຕັ້ງປະຕິບັດໂຄງການດັ່ງກ່າວທັງເປັນການເກັບກຳຂໍ້ມູນ, ຂໍ້ຂ້ອງໃຈຂອງປະຊາຊົນຕໍ່ການຊົດເຊີຍຜົນກະທົບຈາກໂຄງການດັ່ງກ່າວ ເພື່ອນຳເອົາຄຳຄິດເຫັນຕ່າງໆ ຂອງປະຊາຊົນນຳສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງ, ເພື່ອປຶກສາຫາລືຊອກຫາວິທີທາງແກ້ໄຂຕາມຄວາມເໝາະສົມ.

ຈາກນັ້ນ, ຄະນະພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງຂອງແຂວງ, ຂອງເມືອງ ໄດ້ລົງພົບປະປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການດັ່ງກ່າວທັງໝົດ 4 ບ້ານຄື ສະໂກນ, ໄລລອດ, ນ້ຳເງິນ ແລະ ໂພນທອງ ເມືອງວຽງພູຄາພ້ອມທັງລົງຕິດຕາມກວດກາຕົວຈິງຢູ່ພາກສະໜາມຂອງໂຄງການຈຸດທີ່ມີການອ່າຍແລວຂອງບໍລິສັດດັ່ງກ່າວ.

**(ນາງ ອຳພອນ ສີປະເສີດ)**

# ສະຫຼຸບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ຂອງສະຫະພັນແມ່ຍິງຮາກຖານ



(ສພຊ) ກາງເດືອນທັນວາ 2023 ຜ່ານມາ, ສະຫະພັນແມ່ຍິງຮາກຖານ ສະພາປະຊາຊົນແຂວງສາລະວັນ ໄດ້ເປີດກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ປະຈຳປີ 2023 ຂຶ້ນ, ໂດຍການເປັນປະທານຂອງສະຫາຍ ນາງ ນິກວິທະຍາ ພັນທະວົງ ປະທານສະຫະພັນແມ່ຍິງຮາກຖານ ສະພາປະຊາຊົນແຂວງສາລະວັນ ເຂົ້າຮ່ວມພິທີມີສະຫາຍ ນາງ ດວງມາລາ ສີສະໝຸດ ຮອງປະທານສະຫະພັນແມ່ຍິງແຂວງ, ສະຫາຍ ນາງ ທອງໃບ ໄຊຍະສານ ຕາງໜ້າຄະນະພັກຮາກຖານ ສະພາປະຊາຊົນແຂວງ, ມີບັນດາທ່ານແຂກທີ່ເຊີນ ແລະ ສະມາຊິກແມ່ຍິງພາຍໃນຮາກຖານສະພາປະຊາຊົນແຂວງ. ທັງນີ້ກໍເພື່ອສືບຕໍ່ຈັດຕັ້ງຜັນຂະຫຍາຍຄຳຂວັນ ແລະ ເນື້ອໃນຂໍ້ແຂ່ງຂັນ 3 ດີ ຂອງສະຫະພັນແມ່ຍິງລາວ ແລະ ມະຕິກອງປະຊຸມໃຫຍ່ຜູ້ແທນແມ່ຍິງແຂວງສາລະວັນ ຄັ້ງທີ VI ໃຫ້ປະກົດຜົນເປັນຈິງ.

ໃນກອງປະຊຸມ ຄະນະຈັດຕັ້ງພິທີໄດ້ຂຶ້ນກ່າວຈຸດປະສົງ ແລະ ຜ່ານຂໍ້ຕົກລົງ ຂອງສະຫະພັນແມ່ຍິງແຂວງ ວ່າດ້ວຍການອະນຸມັດໃຫ້ສະຫະພັນແມ່ຍິງຮາກຖານ ສະພາປະຊາຊົນແຂວງສາລະວັນ ເປີດກອງປະຊຸມສະຫຼຸບການຈັດ ຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ແລະ ໄດ້ຮັບຟັງການຜ່ານຮ່າງບົດສະຫຼຸບຕີລາຄາການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024 ຂອງສະຫະພັນແມ່ຍິງຮາກຖານ ສະພາປະຊາຊົນແຂວງສາລະວັນ ເຊິ່ງໃນໄລຍະຜ່ານມາ ຄະນະສະຫະພັນແມ່ຍິງຮາກຖານ ສະພາປະຊາຊົນແຂວງ ໄດ້ເອົາໃຈໃສ່ຊຸກຍູ້ການປະຕິບັດຂໍ້ແຂ່ງຂັນ3 ດີຂອງສະຫະພັນແມ່ຍິງລາວຢ່າງຕັ້ງໜ້າ, ໄປພ້ອມໆກັບການສ້າງຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ; ມີການສ້າງແຜນ ແລະ ວິທີການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ເຊິ່ງໄດ້ປະຕິບັດຕາມ 4 ບາດກ້າວຄື: ບາດກ້າວທີ 1: ການກະກຽມ, ບາດກ້າວທີ 2: ການເປີດຂະບວນການແຂ່ງຂັນ 3 ດີ, ບາດກ້າວທີ 3: ການຕິດຕາມກວດກາ, ຊຸກຍູ້ການຈັດຕັ້ງປະຕິບັດຂະບວນການແຂ່ງຂັນ 3 ດີ ແລະ ບາດກ້າວທີ 4: ການສະຫຼຸບຕີລາຄາ ແລະ ການຍ້ອງຍໍ; ເຊິ່ງໃນ 1 ປີ ຜ່ານມາ ສະຫະພັນແມ່ຍິງຮາກຖານ ສະພາປະຊາຊົນແຂວງ ໄດ້ມີການປະເມີນຜົນການຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 3 ດີ ມີສະມາຊິກສະຫະພັນແມ່ຍິງເຂົ້າຮ່ວມ ຈຳນວນ 25 ສະຫາຍ ໂດຍປະຕິບັດຕາມມາດຖານເງື່ອນໄຂທີ່ສູນກາງສະຫະພັນແມ່ຍິງລາວວາງອອກຢ່າງເຂັ້ມງວດ, ຜ່ານການປະເມີນຜົນຕົວຈິງ ເຫັນວ່າສະມາຊິກແມ່ຍິງສາມາດຄັດເລືອກເປັນບຸກຄົນ 3 ດີ ໄດ້ 100%; ຫຼັງຈາກນັ້ນ, ບັນດາສະຫາຍສະມາຊິກແມ່ຍິງໄດ້ປະກອບຄຳຄິດຄຳເຫັນເພີ່ມເຕີມແລະໄດ້ຕົບມືຮັບຮອງເອົາບົດສະຫຼຸບດັ່ງກ່າວ, ພ້ອມທັງໄດ້ຜ່ານຂໍ້ຕົກລົງວ່າດ້ວຍການມອບໃບຍັ້ງຢືນ 3 ດີ ປະຈຳປີ 2023 ໃຫ້ສະຫະພັນແມ່ຍິງຮາກຖານ ສະພາປະຊາຊົນແຂວງສາລະວັນ ທີ່ດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ ໃນໄລຍະ 3 ປີຕໍ່ເນື່ອງ ແລະ ໄດ້ຈັດພິທີມອບ-ຮັບຢ່າງເປັນທາງການ.

ສະຫາຍ ນາງ ດວງມາລາ ສີສະໝຸດ ໄດ້ມີຄຳເຫັນໂອ້ລົມຕໍ່ພິທີ ເຊິ່ງໄດ້ເນັ້ນໜັກສະຫະພັນແມ່ຍິງຮາກຖານ ສະພາປະຊາຊົນແຂວງ ເອົາໃຈໃສ່ໃນການສຶກສາອົບຮົມການເມືອງແນວຄິດໜັກແໜ້ນເຂັ້ມແຂງ, ຕັ້ງໜ້າເສີມຂະຫຍາຍຄວາມສາມັກຄີເປັນປຶກແຜ່ນພາຍໃນແມ່ຍິງຮາກຖານ, ມີຄວາມເປັນເອກະພາບກັນພາຍໃນຄະນະ ໃນການຈັດຕັ້ງປະຕິບັດວຽກງານຕ່າງໆ, ຕ້ອງພັດທະນາຕົນເອງ ແລະ ສືບຕໍ່ຈັດຕັ້ງປະຕິບັດເນື້ອໃນ 3 ດີໃຫ້ມີຄຸນນະພາບ, ເປັນແບບຢ່າງທີ່ດີ, ຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ໃນສັງຄົມ ແລະ ອື່ນໆ.

**(ດີລຳພົນ ພົມມະຈັນ)**




# ເຊກອງ ໄຂກອງປະຊຸມສະໄໝສາມັນເທື່ອທີ 6

(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ6 ຂອງສະພາປະຊາຊົນແຂວງ ຊຸດທີ II ໄຂຂຶ້ນຢ່າງເປັນທາງການໃນວັນທີ 3 ມັງກອນ 2024 ທີ່ສະໂມສອນສະພາປະຊາຊົນແຂວງເຊກອງໂດຍການເປັນປະທານຂອງທ່ານ ດົງເຜັດ ພະຍົນ ປະທານສະພາປະຊາຊົນແຂວງ, ໂດຍມີທ່ານເຫຼັກໄຫຼ ສີວິໄລ ເຈົ້າແຂວງເຊກອງ, ມີບັນດາການນຳພັກ-ລັດຂັ້ນແຂວງ, ອະດີດການນຳແຂວງ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ພະແນກການອ້ອມຂ້ອງແຂວງ, ບໍລິສັດ-ລັດວິສາຫະກິດ ແລະແຂກຖືກເຊີນເຂົ້າຮ່ວມຫຼາຍ 100 ກວ່າທ່ານ.



ໃນວາລະດຳເນີນກອງປະຊຸມ ທ່ານ ດົງເຜັດ ພະຍົນ ໄດ້ກ່າວສູນທອນພິດເປີດກອງປະຊຸມຢ່າງເປັນທາງການວ່າ: ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II ຈະໄດ້ດຳເນີນໄປຈົນເຖິງວັນທີ 5 ມັງກອນ 2024 ເຊິ່ງດຳເນີນເປັນເວລາ 3 ວັນ ໃນກອງປະຊຸມຈະໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນພື້ນຖານຂອງທ້ອງຖິ່ນເປັນຕົ້ນແມ່ນພິຈາລະນາ ແລະ ຮັບຮອງເອົາ: ບົດລາຍງານໂດຍສັງເຂບຂອງທ່ານເຈົ້າແຂວງກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານຂອງແຂວງທີ່ພົ້ນເດັ່ນປະຈຳປີ 2023 ແລະ ທິດທາງແຜນການປະຈຳປີ 2024; ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024; ບົດລາຍງານຂອງອົງການປົກຄອງແຂວງກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານຂອງແຂວງ ແລະ ທິດທາງແຜນການ ປະຈຳປີ 2024; ບົດລາຍງານຂອງອົງການປົກຄອງແຂວງກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມທຸກຍາກດ້ານເສດຖະກິດ-ການເງິນ ໃນໄລຍະ 3 ປີ (2021-2023) ຜ່ານມາ; ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະ 3 ປີ (2021-2023) ຜ່ານມາ; ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການສ້າງຕັ້ງເມືອງໃໝ່ຂອງແຂວງເຊກອງ; ບົດລາຍງານຂອງອົງການກວດສອບແຫ່ງລັດປະຈຳພາກໃຕ້ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ2024, ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2022 ຂອງແຂວງເຊກອງ; ລາຍງານຂອງອົງການກວດກາລັດແຂວງກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024, ບົດລາຍງານຜົນການກວດກາຕາມຜົນການກວດສອບ ປີ 2021 ຂອງແຂວງເຊກອງ; ບົດລາຍງານຂອງສານປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024; ບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024; ບົດລາຍງານຂອງສະພາປະຊາຊົນແຂວງກ່ຽວກັບການຈັດຕັ້ງປະຕິບັດວຽກງານ ປະຈຳປີ 2023 ແລະ ທິດທາງແຜນການ ປະຈຳປີ 2024; ພິຈາລະນາ, ຮັບຮອງເອົາການແຕ່ງຕັ້ງບຸກຄະລາກອນທີ່ສະພາປະຊາຊົນແຂວງເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ຕາມການສະເໜີຂອງທ່ານເຈົ້າແຂວງ. ພ້ອມນີ້ ກໍໄດ້ຮັບຟັງບົດປະກອບຄຳເຫັນຂອງແນວລາວສ້າງຊາດແຂວງ ຕໍ່ບົດລາຍງານຂອງສະພາປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານປະຈຳປີ 2023 ແລະທິດທາງແຜນການ ປະຈຳປີ 2024.

ນອກນັ້ນ, ຍັງຈະໄດ້ຮັບຟັງການຊີ້ແຈງຂອງອົງການປົກຄອງແຂວງ, ພາກສ່ວນທີ່ກ່ຽວຂ້ອງຊີ້ແຈງຕາມຄຳຖາມເຈາະຈີ້ມຂອງຄະນະປະຈຳສະພາປະຊາຊົນແຂວງ, ຄຳຊັກຖາມຂອງສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງ. ທ່ານປະທານກອງປະຊຸມໄດ້ກ່າວຕື່ມອີກວ່າ: ບັນດາເນື້ອໃນທີ່ນຳມາຄົ້ນຄ້ວາ, ພິຈາລະນາແລະຮັບຮອງເອົາໃນຄັ້ງນີ້ລ້ວນແຕ່ເປັນບັນຫາສຳຄັນທັງໝົດ ສະນັ້ນ ໃນໄລຍະດຳເນີນກອງປະຊຸມ ຂໍຮຽກຮ້ອງໃຫ້ບັນດາສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງທຸກທ່ານ ຈົ່ງພ້ອມກັນສຸມສະຕິປັນຍາ ແລະ ຍົກສູງຄວາມຮັບຜິດຊອບການເມືອງຂອງຕົນເຂົ້າໃນການຄົ້ນຄວ້າ-ພິຈາລະນາ ແລະປະກອບຄຳຄິດເຫັນຢ່າງມີປະຊາທິປະໄຕເພື່ອຮັບປະກັນຄວາມຖືກຕ້ອງສອດຄ່ອງຕາມລະບຽບກົດໝາຍ ເຮັດໃຫ້ເນື້ອໃນທີ່ນຳມາພິຈາລະນາ, ຮັບຮອງເອົາໃນກອງປະຊຸມຄັ້ງນີ້ມີຄວາມເປັນເອກະພາບຖືກຕ້ອງ ແລະ ສົມບູນ ສາມາດນຳໄປປະຕິບັດຕົວຈິງໄດ້ຢ່າງມີຄຸນນະພາບ.

**(ສຸກກະສັນ)**






# ນະໂຍບາຍ ແລະ ພາກປະຕິບັດ ສ້າງພາບ ແລະ ຊີວິດຈິງ

# ດັ້ນກົບເມກ


By Frits Ahlefeldt

ຜູ້ຂຽນເຂົ້າໃຈວ່າ ວຽກງານ ອັນໃດທີ່ຈະໄດ້ຮັບຜົນຈົບງາມແມ່ນວິທີຄິດ ຫຼື ນະໂຍບາຍຕ້ອງຄຽງຄູ່ກັນໄປກັບພາກປະຕິບັດຕົວຈິງ ບໍ່ແມ່ນວ່ານະໂຍບາຍອອກມາດີເລີດ ແຕ່ພາກປະຕິບັດຈະໄດ້ຜົນແບບໃດກໍບໍ່ສົນໃຈ ເຊັ່ນດຽວກັບຊີວິດ-ວັດທະນະທຳ ທີ່ສັງຄົມໃດ-ຄົນໃດມຸ່ງສ້າງແຕ່ພາບພົດ ວ່າໂຕເອງຮັກຫອມ ເຊີດຊູວັດທະນະທຳ ແຕ່ໃນການດຳເນີນຊີວິດຈິງ ພັດປະພຶດຕ່າງກັນ ເຫັນຫ່າງເຊິ່ງບໍ່ຕ່າງກັບລັກສະນະສ້າງແຕ່ເປືອກ-ດອກ ແລະ ໃບ ແຕ່ປາສະຈາກແກ່ນ.

ຜູ້ຂຽນຍົກປະເດັນເລື່ອງຄົນເຮົາທີ່ຫຼົງເປັນຫ່ວງແຕ່ສ້າງພາບພົດໜ້າຕາໃຫ້ເບິ່ງຄືວ່າເກັ່ງກ້າ-ດີງາມ ຈົນຊີວິດຈິງບໍ່ມີຫຼັກຄ້ຳປະກັນຊີວິດ, ບາງຄົນການປະພຶດໄປ-ມາ-ແຕ່ງໂຕດີງາມ ເຖິງຈະບໍ່ມີເຮືອນຢູ່-ອາໄສເພິ່ງຍາດພີ່ນ້ອງຢູ່ ແຕ່ເປັນຫ່ວງຢ່າງດຽວຕ້ອງມີ ພາບພົດຊີວິດໂກ້ຫຼູ ເວລາເວົ້າຈາປາໄສກໍອວດແຕ່ວ່າໂຕເອງເກັ່ງກວ່າຄົນອື່ນ ພໍເຖິງເວລາເຂົາໃຫ້ລົງມືປະຕິບັດ ບໍ່ຮູ້ຊິເຮັດປຽບໄດ້ກັບປາກ ແລະ ມື; ປາກເວົ້າເອົາຈະງ່າຍ ແຕ່ມືປະຕິບັດຕົວຈິງຍາກກວ່າ ດັ່ງນັ້ນ, ປາກົດການທີ່ເກີດຂຶ້ນໃນສັງຄົມ ທ່າອ່ຽງອີງໃສ່ບໍລິໂພກນິຍົມ ແລະ ວັດຖຸນິຍົມ ການສ້າງພາບພົດດີງາມໃຫ້ແກ່ຊີວິດ ຈຶ່ງຄືເງົາຕິດໂຕເພື່ອອວດກັນໃຫ້ຄືທີ່ນັ້ນດອກ.

ທິດສະດີ ແລະ ພາກປະຕິບັດ ຈະໄດ້ຜົນຕ້ອງຄູ່ກັນໄປ ຫຼື ມີອັນໃດຜິດພາດ-ບົກຜ່ອງ ຕ້ອງກວດສອບຍອມຮັບຄວາມຈິງ-ຍອມຮັບການປ່ຽນແປງຟັງຄຳແນະນຳຈາກຄົນອ້ອມຂ້າງ ເຊັ່ນດຽວກັບການດຳເນີນຊີວິດກ້າວໄປສູ່ຄວາມສຳເລັດ ຕ້ອງມີຫຼັກການ ແລະ ແກ່ນສານໃນຊີວິດຈິງ ຢ່າລືມວ່າ: ພາບພົດພຽງແຕ່ເປັນຮູບນອກ ໂອ້ອວດກັນໃຫ້ໄດ້ໜ້າຕາ ມັນກິນແທນເຂົ້າບໍ່ໄດ້ ເຊິ່ງຊີວິດຈິງ ມັນຕ້ອງການອາຊີບລ້ຽງໂຕເອງໄດ້ ສ້າງລາຍໄດ້ໃຫ້ໂຕເອງ-ເພິ່ງຕົນເອງໄດ້ ເຮັດໃຫ້ຊີວິດເຂັ້ມແຂງກ້າວໄປເທື່ອລະຂັ້ນ ບໍ່ສ້າງບັນຫາຕິດໜີ້ຢືມຊັບຄົນອື່ນ ໃຊ້ໝົດແລ້ວບໍ່ຫາແທນເຂົາໄດ້ ເຂົ້າທຳນອງເກັ່ງແຕ່ສ້າງພາບ.

ສັງລວມແລ້ວໃນແງ່ຮີດຄອງ-ວັດທະນະທຳ ການນຸ່ງຖືຍິ່ງສຳຄັນ ບໍ່ແມ່ນຖືເອົາພຽງການສວມໃສ່ຖ່າຍຮູບອວດໂຊ ແຕ່ຊີວິດຈິງຕ້ອງຕິດພັນກັບການນຳໃຊ້-ການເຊີດຊູດ້ວຍການປະຕິບັດຈິງ ຖ້າຈະໃຊ້ຊີວິດຖືເອົາພຽງພາບພົດດີງາມ ກໍເທົ່າກັບວ່າມີຊີວິດບໍ່ມີວິນຍານ.




# ວຸດທິພາວະ–ວຸດທິການສຶກສາ

'ວຸດທິພາວະ' ແລະ 'ວຸດທິການສຶກສາ' ເປັນສອງຄຳທີ່ມີຄວາມໝາຍຕ່າງກັນ ເຖິງວ່າຈະມີຄຳວ່າ 'ວຸດທິ' ຢູ່ໜ້າກຸ່ມຄຳຄືກັນກໍຕາມ.

'ວຸດທິພາວະ' ເປັນຄຳປະສົມແບບສະໝາດຈາກເຄົ້າປາລີ ປະກອບດ້ວຍຄຳວ່າ Vuddhi ແລ້ວແປງສຽງເປັນຄຳລາວວ່າ 'ວຸດທິ' ໝາຍເຖິງ "ພູມຄວາມຮູ້" ແລະ Bhāva ແປງສຽງເປັນຄຳລາວວ່າ 'ພາວະ' ໝາຍເຖິງ "ຄວາມມີ, ຄວາມເປັນ". ເມື່ອສອງຄຳນີ້ສະໝາດເຂົ້າກັນເປັນ 'ວຸດທິພາວະ' ກໍໝາຍເຖິງ "ພາວະຄວາມເປັນຜູ້ໃຫຍ່ທີ່ເໝາະສົມຕາມໄວອາຍຸທັງທາງຮ່າງກາຍແລະຈິດໃຈ" ຫຼືເວົ້າສັ້ນໆກໍແມ່ນ "ພາວະຄວາມເປັນຜູ້ໃຫຍ່" ເຊັ່ນ

- ປຶ້ມຫົວນີ້ໄດ້ນຳສະເໜີຄວາມຈິງໃນຫຼາຍໆດ້ານໃຫ້ກັບຜູ້ອ່ານທີ່ມີວຸດທິພາວະ.
- ລາວໄດ້ສະແດງເຖິງຄວາມມີວຸດທິພາວະຂອງຕົນໃຫ້ຜູ້ອື່ນຮູ້.
- ນາງຈະບໍ່ສ້າງຄອບຄົວກັບຊາຍທີ່ຂາດວຸດທິພາວະ.

'ວຸດທິການສຶກສາ' ເປັນຄຳປະສົມປາລີ-ສັນສະກິດ ປະກອບດ້ວຍຄຳວ່າ Vuddhi ແລ້ວແປງສຽງເປັນຄຳລາວວ່າ 'ວຸດທິ' ໝາຍເຖິງ "ພູມຄວາມຮູ້" ແລະ ການສຶກສາ ທີ່ເປັນອາການນາມ ປະກອບດ້ວຍຄຳວ່າ Kāra ແປງສຽງເປັນລາວວ່າ ການ + Śikṣ ແປງສຽງເປັນຄຳລາວວ່າ ສຶກສາ ປະກອບເຂົ້າກັນເປັນ 'ການສຶກສາ' ໝາຍເຖິງ "ການສ້າງຄົນໃຫ້ມີຄວາມຮູ້ຄວາມສາມາດ". ເມື່ອສອງຄຳນີ້ປະສົມເຂົ້າກັນເປັນ 'ວຸດທິການສຶກສາ' ກໍໝາຍເຖິງ "ຜົນສຳເລັດຂອງການຮຽນຫຼືຄວາມຮູ້, ທັກສະແລະຄວາມສາມາດຂອງບຸກຄົນ" ເຊັ່ນ:

- ວຸດທິການສຶກສາຂອງຄຳແດງແມ່ນລະດັບປະລິນຍາຕີ.
- ປະກາສະນິຍະບັດ ແມ່ນໃບຢັ້ງຢືນວຸດທິການສຶກສາ.
- ຊາຍຄົນນັ້ນບໍ່ມີວຸດທິການສຶກສາຫຍັງ ຫົວໜ້າຈຶ່ງໃຫ້ລາວເປັນຄົນອະນາໄມຫ້ອງການ.

ເມື່ອເວົ້າເຖິງລະດັບວຸດທິການສຶກສາ ໃນຂອບວຸດທິການສຶກສາແຫ່ງຊາດ ເພິ່ນໄດ້ແບ່ງອອກເປັນ 8 ລະດັບ ຕາມແຕ່ລະສາຍ ແລະ ປະເພດວຸດທິການສຶກສາ ດັ່ງນີ້:

- ສາຍສາມັນສຶກສາ: ລະດັບ 1 ປະຖົມສຶກສາ, ລະດັບ 2 ມັດທະຍົມສຶກສາຕອນຕົ້ນ, ລະດັບ 3 ມັດທະຍົມສຶກສາຕອນປາຍ.
- ສາຍອາຊີວະ: ລະດັບ 1 ວິຊາຊີບຊັ້ນຕົ້ນລະດັບໜຶ່ງ, ລະດັບ 2 ວິຊາຊີບຕົ້ນຕົ້ນລະດັບສອງ, ລະດັບ 3 ວິຊາຊີບຊັ້ນຕົ້ນລະດັບສາມ, ລະດັບ 4 ວິຊາຊີບຊັ້ນກາງ, ລະດັບ 5 ວິຊາຊີບຊັ້ນສູງ.
- ສາຍການສຶກສາຊັ້ນສູງ: ລະດັບ 5 - ອະນຸປະລິນຍາ, ລະດັບ 6 - ປະລິນຍາຕີ, ລະດັບ 7 - ປະລິນຍາໂທ, ລະດັບ 8 - ປະລິນຍາເອກ. ນອກຈາກນີ້ ຍັງມີ ລົງເລິກຂະແໜງວິຊາ (ລະດັບ 6), ຊ່ຽວຊານຂັ້ນໜຶ່ງ (ລະດັບ 7) ແລະ ຊ່ຽວຊານຂັ້ນສອງ (ລະດັບ 8).




# ວິທີເຮັດວຽກ

## ພາກທີ 5
## ບັນຫາວິທີເຮັດວຽກ

1. ມີພະນັກງານດີ ເຮັດວຽກຫຍັງກໍແລ້ວ: ວຽກການຈະສຳເລັດ ຫຼື ປະລາໄຊ ກໍແລ້ວແຕ່ພະນັກງານຈະດີ ຫຼື ບໍ່ດີ, ນັ້ນແມ່ນ ຫຼັກຄວາມຈິງອັນຄັກແນ່. ຫຼັກຄວາມຈິງອັນນີ້ຈະເຫັນໄດ້ໃນບົດຮຽນອັນຈະແຈ້ງດັ່ງລຸ່ມນີ້:

ລັດຖະບານ ຢາກຊ່ວຍພີ່ນ້ອງຮ່ວມຊາດ ບ້ານພູດອຍໃຫ້ເປີດການຮຽນວັດທະນະທຳ ໄດ້ປຸກໂຮງຮຽນ ແລ້ວແຕ່ງນາຍຄູໄປປະຈຳຢູ່ໂຮງຮຽນນັ້ນຫຼາຍເທື່ອ, ແຕ່ຫາກບໍ່ມີຄົນຮຽນຈັກຄົນ, ພວກນາຍຄູພາກັນແກວ່ງຫົວກັບຄືນບ້ານ.

ນາຍ ກ ເປັນທະຫານຢູ່ໃນກອງທັບແຫ່ງຊາດ, ໄດ້ສູ້ຮົບ ຖືກບາດເຈັບທີ່ແຂນເລີຍຫັກ, ຈັບປືນ ຄືນໄປ ຮົບບໍ່ໄດ້ອີກ, ຈຶ່ງຂໍສະເໜີໄປເປັນຄູສອນ. ເມື່ອຖືກສົ່ງໄປປະຈຳຢູ່ບ້ານ ປ, ນາຍຄູ ກ ໄດ້ໄປຢ້ຽມຢາມປະຊາຊົນບ້ານນີ້ໝົດທຸກເຮືອນ, ເວົ້າລົມກັບບັນດາພໍ່ແມ່ຜູ້ເຖົ້າ ຜູ້ແກ່ ແລະ ເດັກນ້ອຍ. ຜົນຂອງການເວົ້າລົມກັນນັ້ນ ພາໃຫ້ຮູ້ວ່າປະຊາຊົນບ້ານນີ້ທຸກຍາກ, ມີຄົນໜ້ອຍ ເດັກນ້ອຍທັງຫຼາຍຕ້ອງຢູ່ເຮືອນເພື່ອຊ່ວຍວຽກພໍ່ແມ່ ຈຶ່ງໄປໂຮງຮຽນບໍ່ໄດ້.

ນາຍຄູ ກ ກໍຊອກຫາວິທີແກ້ໄຂຄື: ໃຫ້ເດັກນ້ອຍໄປຮຽນ, ທັງໄດ້ເຮັດວຽກໄປພ້ອມກັນ: ຈຶ່ງຊັກຊວນພວກເດັກນ້ອຍລວມກັນເປັນຈຸ ຄື: ຈຸລ້ຽງຄວາຍ, ຈຸຕັດຫຍ້າ, ຈຸສານໄມ້ ແລະ ອື່ນໆ, ໃຫ້ເດັກນ້ອຍເຫຼົ່ານັ້ນທັງໄດ້ຮຽນ ແລະ ທັງໄດ້ເຮັດວຽກໄປພ້ອມກັນ.

ອ່ານຕໍ່ສະບັບໜ້າ...

# ຂຽນຄຳລາວໃຫ້ຖືກ

# ຄູແສງ

| ຖືກ | ຜິດ |
|---|---|
| ກະສິກອນ | ກະຊິກອນ |
| ຄາຕະກອນ | ຂ້າຕະກອນ |
| ຈິດຕະກອນ | ຈິຕະກອນ |
| ສຳມະນາກອນ | ສະມະນະກອນ |
| ປະຊາກອນ | ປະສາກອນ |
| ປະຕິມາກອນ | ປະທິມາກອນ |
| ລັດຖະກອນ | ລັດທະກອນ |
| ວິສະວະກອນ | ວິສາວະກອນ |
| ວິທະຍາກອນ | ວິທາຍະກອນ |



ສຸຂະພາບທາຍໂລດ

# ໝາກຕານ ຫຼື ຕົ້ນຕານ ໝາກໄມ້ພື້ນບ້ານ ແຕ່ຄຸນປະໂຫຍດຫຼວງຫຼາຍ

ໂດຍ: ທີອາກະທີ



ໝາກຕານ ເປັນໝາກໄມ້ພື້ນບ້ານທີ່ຢູ່ຄູ່ກັບຄົນລາວ ຕັ້ງແຕ່ອະດີດຈົນເຖິງປັດຈຸບັນ ເຊິ່ງທຸກສ່ວນຂອງໝາກຕານ ສາມາດນຳມາໃຊ້ປະໂຫຍດຢ່າງຫຼວງຫຼາຍ ເຊັ່ນ: ນ້ຳຕານກ້ອນ ຫຼື ຈະນຳໝາກອ່ອນມາຮັບປະທານສົດໆກໍ່ຍິ່ງໄດ້ລົດຊາດແຊບ, ຫອມຫວານ ແລະ ຮູ້ສຶກສົດຊື່ນ ເຊິ່ງຄຸນປະໂຫຍດແຕ່ລະຢ່າງນັ້ນ ມີດັ່ງນີ້:

1. ໝາກຕານ ປະກອບດ້ວຍສານອາຫານທີ່ມີປະໂຫຍດຢ່າງຫຼວງຫຼາຍຕໍ່ຮ່າງກາຍ ເພາະມີຄາໂບໄຮເດສ ທີ່ໃຫ້ພະລັງງານທີ່ດີແກ່ຮ່າງກາຍ ພ້ອມທັງມີໄຟເບີທີ່ເຮັດໃຫ້ສຶກອີ່ມດົນ ແລະຊ່ວຍໃນການຂັບຖ່າຍທີ່ດີ ແລະ ປ້ອງກັນການຖອກທ້ອງ;

2. ມີແຄວຊ້ຽມ, ຟອດຟໍສຣັດ ທີ່ຊ່ວຍເສີມສ້າງກະດູກ ແລະ ແຂ້ວ ໃຫ້ແຂງແຮງ ແລະ ຊ່ວຍໃຫ້ຮ່າງກາຍເຮັດວຽກເປັນປົກກະຕິ;

3. ມີທາດເຫຼັກ ຊ່ວຍບຳລຸງເລືອດ ແລະ ການໝູນວຽນຂອງເລືອດ. ນອກຈາກນັ້ນ, ຍັງມີວິຕາມິນຊີ, ສານຕ້ານອະນຸມູນອິດສະຫຼະທີ່ດີຕໍ່ຮ່າງກາຍ ເຮັດໃຫ້ຮ່າງກາຍແຂງແຮງ, ຊ່ວຍບຳລຸງຜິວພັນໃຫ້ສົດໃສ ແລະ ແຂງແຮງ.

ພ້ອມນີ້, ໝາກຕານຍັງມີສັບພະຄຸນທາງຢາສະໝຸນໄພນຳອີກ ເຊັ່ນ: ຊ່ວຍລະລາຍຂີ້ກະເທີ່ໃນລຳຄໍ, ບັນເທົາອາການໄອ, ໄອຊ້ຳເຮື້ອ ແລະ ຊ່ວຍບັນເທົາອາການຮ້ອນໃນໄດ້ອີກດ້ວຍ.

**ແຫຼ່ງຂໍ້ມູນຈາກ: www.lnr.org.la**




## ກຳມະບານລາວກ້າວໄປ

**# ກົງໃຈ ແສງອຳພັນ**

ເນື່ອງໃນວັນສ້າງຕັ້ງສະຫະພັນກຳມະບານລາວ ຄົບຮອບ 68 ປີ (1/2/1956-1/2/2024)

❊ 1 ກຸມພາ ປະກາດກ້ອງ          ວັນແຫ່ງກຳມະບານລາວ
ຊາວຜູ້ອອກແຮງງານ          ຊື່ນບານຫົວຍິ້ມ
ມີຜູ້ນຳພາສູ້          ທວງສິດທິມະນຸດ
ຫຼຸດຜ່ອນການຮັບໃຊ້          ມິເຄີຍໄດ້ຄ່າແຮງ ຄາວນັ້ນ

❊ ນ້ຳໃຈແສນເຫືອດແຫ້ງ          ເກີນກວ່າທະເລຊາຍ ນາຍທຶນເອີຍ!
ຊຸມເຈົ້ານາຍເລືອດເຢັນ          ຂູ່ເຂັນຈາຂ້າ
ຄັນວ່າໃຜທວງຄົ້ນ          ສິດຕົນນາມມະນຸດ
ພວກເຂົາຂົ່ມຂູ່ຂ້າ          ຫາກໃຜອ້າເອີ່ຍຂໍ

❊ ຕໍ່ມາໂຮມກຸ່ມກ້ອນ          ທວງປະໂຫຍດຄວນມີ
ພັກປະຊາເປັນແກນນຳ          ດຸ່ງເດີນພາສູ້
ມະຕິຕົກລົງແຈ້ງ          ຖະແຫຼງການປະກາດເດັ່ນ
ເຮັດວຽກແປດຊົ່ວໂມງຕໍ່ມື້          ຄ່າແຮງໄດ້ຕອບແທນ ຊອບແລ້ວ!

❊ ຍ້ອນວ່າມີພັກຊີ້          ນຳພາຮຸ່ງເຮືອງໃສ
ກຳມະບານລາວກ້າວໄປ          ຄູ່ປະຊາຊາວເຊື້ອ
ເພາະແຕ່ເໜືອເຖິງໃຕ້          ປວງຊົນລາວຫວັງເພິ່ງ
ການນຳ ກຳມະບານຜູ້ກ້າ          ປະຊາຍ້ອງເຊີດຊູ ແທ້ນາ

❊ 1 ກຸມພາ ຂວບເຂົ້າ          68 ພັນສາ
ນຳເອົາພອນໄຊມາ          ຍື່ນຍໍຍັງເຈົ້າ
ກຳມະບານລາວຍືນໝັ້ນ          ໂພຍໄພຫາຍຫ່າງ
ມີຄວາມສຸກສືບສ້າງ          ພາລາວກ້າວພັດທະນາ ຊອບແລ້ວ!






## ຫົກສາຍ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັບເອງ ບໍ່ເຄັ່ງພິທີການ)*

**# ສາວຈົ້ມ**

❊ **ອຸ້ຍ**ເຊີຍ! ວັນສ້າງຕັ້ງກຳມະບານລາວ ທີ່ກ້າວມາຄົບຮອບ **86** ປີ **(1/2/1956-1/2/2024)** ຢ່າງສຸດໃຈຂໍໃຫ້ຍືນຍົງໝັ້ນ **ບັນດາທ່ານກຳມະບານລາວ** ຊາວຜູ້ອອກແຮງງານ ທີ່ອາດຫານແຮງກ້າ ໂລດາໂພຍໄພເອັ້ນ ໜີໄປໄກຫ່າງ **ອາຍຸ-ວັນນະ-ສຸຂະ-ພະລາບາໄມ**ມາດມຸ້ງ ໃຫ້ສົມແມ້ງດັ່ງໝາຍ **ທຸກທ່ານເບີ!**

❊ **ກົມ**ອຸຕຸນິຍົມ ແລະ ອຸທົກກະສາດ ພະຍາກອນວ່າ **ໄລຍະນີ້** ມວນອາກາດໜາວເຢັນທີ່ປະເທດຈີນ ຍັງມີກຳລັງແຮງ ແລະ ຈະສືບຕໍ່ແຜ່ລົງມາປົກຄຸມທົ່ວທຸກພາກຂອງປະເທດລາວ ດ້ວຍກຳລັງປານກາງ ອາດເຮັດໃຫ້ອຸນຫະພູມ **ອາກາດສືບຕໍ່ຫຼຸດລົງ** ພາໃຫ້ໜາວເຢັນ ໂດຍສະເພາະເຂດ**ພາກເໜືອ ແລະ ເຂດພູພຽງບໍລະເວນ** ເປັນທ່ອງເດພີ່ນອງ ບັນດາເຜົ່າທັງຫຼາຍ ຂໍໃຫ້ກຽມສະໄບແຜ່ນແພປົງຕຸ້ມ ຄຸມຮ່າງກາຍກຽມພ້ອມ ດູແລເອົາໃຈໃສ່ **ລົງຮັກສາສຸຂະພາບ**ໃຫ້ກາຍ ແລະ ໃຈອົບອຸ່ນພ້ອມ ໂພຍໄພເອັ້ນຫ່າງຫາຍ **ທ່ານເອີຍ!**

## ຊອບຍິ້ມ

**# ແອ່ບຕຸ້ງ**

### ເລື່ອງ: ກູແມ່ນໃຜ?

ທີ່ຮ້ານເຫຼົ້າແຫ່ງໜຶ່ງ ສອງສ່ຽວລົມກັນ

**ທິດເລີດ:** ຮອຍລິບສະຕິກຄືເຕັມເສື້ອມຶງແທ້ສ່ຽວ ບໍ່ຢ້ານມີເລື່ອງສະເບາະ?

**ຊຽງແອ່ບ:** ປະໂທ້! ມຶງວ່າກູແມ່ນໃຜ?

**ທິດເລີດ:** ກູຢ້ານມຶງຖືກຕີຊັ້ນດອກ! ຄັນຍາມເມຍມຶງເອົາເຄື່ອງໄປຊັກ?

**ຊຽງແອ່ບ:** ບໍ່ດອກ ເພາະກູເປັນຄົນຊັກເອງ

**ທິດເລີດ:** ?!?!?!?!?



### ຄະຕິເຕືອນໃຈ

**# ດອກຫຍ້າ**

ຊາດທີ່ແບວບາມບັ້ງຈົ່ງກົ່ງກາຊີຕອດ ກົບແລ້ວ
ເຮັດໃຫ້ຄືດັ່ງມ້ອນໄຍຫຸ້ມທໍໂຕ ບັ້ນທ້ອນ

# ອະດີດຜູ້ນຳພູຖານ ຊະນະການເລືອກຕັ້ງ ທ່າມກາງວິກິດເສດຖະກິດ

*ພັກການເມືອງຂອງອະດີດນາຍົກລັດຖະມົນຕີພູຖານ ຊະນະການເລືອກຕັ້ງທົ່ວໄປຢ່າງຂາດຮອຍ ທ່າມກາງວາລະຮີບດ່ວນທາງເສດຖະກິດ ທີ່ສົ່ງຜົນກະທົບຕໍ່ຄຸນນະພາບຊີວິດຂອງປະຊາກອນໃນປະເທດ, ເຊິ່ງໃຊ້"ລວມຍອດຄວາມສຸກແຫ່ງຊາດ" ເປັນຕົວວັດແທກການພັດທະນາອີກດ້ວຍ.*



ສຳນັກຂ່າວ AP ລາຍງານຈາກນະຄອນຫຼວງທິມພູ, ປະເທດພູຖານ ເມື່ອວັນທີ 10 ມັງກອນຜ່ານມາວ່າ: ຜົນຢ່າງບໍ່ເປັນທາງການຂອງການເລືອກຕັ້ງສະພາແຫ່ງຊາດພູຖານຊຸດໃໝ່ ທັງໝົດ 47 ທີ່ນັ່ງ ທີ່ໄດ້ຈັດຂຶ້ນໃນລະຫວ່າງວັນທີ 30 ພະຈິກ 2023 ຫາ 09 ມັງກອນ 2024 ປາກົດວ່າ ພັກປະຊາທິປະໄຕປະຊາຊົນ (People's Democratic Party-PDP) ຂອງອະດີດນາຍົກລັດຖະມົນຕີ ເຊີຣິງ ທອບເກ (Tshering Tobgay) ໄດ້ຮັບການເລືອກຕັ້ງຫຼາຍທີ່ສຸດ 30 ທີ່ນັ່ງ, ຖືວ່າເປັນໄຊຊະນະຢ່າງຂາດຮອຍ; ຂະນະທີ່ຍັງເຫຼືອ 17 ທີ່ນັ່ງ ເປັນຂອງພັກພູຖານເທນເດຣລ (Bhutan Tendrel Party-BTP).

ທ່ານ ທອບເກ ອາຍຸ 58 ປີ ຈະກັບຄືນມາດຳລົງຕຳແໜ່ງຜູ້ນຳລັດຖະບານສະໄໝທີ 2 ເຊິ່ງກ່ອນໜ້ານີ້ເຄີຍປະຕິບັດໜ້າທີ່ລະຫວ່າງປີ 2013-2018. ທາງດ້ານທ່ານ ນະເຣນທຣາ ໂມດີ ນາຍົກລັດຖະມົນຕີອິນເດຍ, ຄູ່ຮ່ວມມືທາງການຄ້າທີ່ສຳຄັນຂອງພູຖານ, ເປັນຜູ້ນຳລະດັບປະເທດຄົນທຳອິດທີ່ສະແດງຄວາມຍິນດີກັບທ່ານ ທອບເກ.

ການເລືອກຕັ້ງຂອງພູຖານໃນຄັ້ງນີ້ ເກີດຂຶ້ນທ່າມກາງວິກິດການເສດຖະກິດພາຍໃນປະເທດ ເຊິ່ງອັດຕາການເຕີບໂຕດ້ານເສດຖະກິດຕໍ່ປີໃນ 5 ປີຜ່ານມາ ແມ່ນຢູ່ທີ່ປະມານ 1,7% ແລະ ອັດຕາການວ່າງງານຂອງປະຊາກອນໄວໜຸ່ມສູງເຖິງ 29% ອີງຕາມສະຖິຕິຂອງທະນາຄານໂລກ. ສະຖານະການທີ່ເກີດຂຶ້ນ ເຮັດໃຫ້ປະຊາກອນໜຸ່ມສາວຂອງພູຖານ ຈຶ່ງເລືອກໄປຊອກຫາໂອກາດຢູ່ຕ່າງປະເທດ ໂດຍທີ່ອົດສະຕຣາລີ ເປັນຈຸດໝາຍປາຍທາງອັນດັບໜຶ່ງ; ຂໍ້ມູນຈາກສື່ທ້ອງຖິ່ນລະບຸວ່າ: ໃນໄລຍະ 12 ເດືອນ ມາຈົນເຖິງເດືອນກໍລະກົດ 2023 ມີຊາວພູຖານປະມານ 15.000 ຄົນ ກວມເອົາເກືອບ 2% ຂອງປະຊາກອນທັງໝົດຂອງປະເທດ (ປະມານ 800.000 ຄົນ) ໄດ້ຮັບການອະນຸມັດວີຊາຈາກຫຼາຍປະເທດ.

ພູຖານເປັນປະເທດທີ່ບໍ່ມີທາງອອກສູ່ທະເລ, ມີຊາຍແດນຕິດກັບ ສປ ຈີນ ແລະ ອິນເດຍ, ປະຊາກອນສ່ວນຫຼາຍແມ່ນຊາວພຸດ, ມີສາຍພົວພັນທາງເສດຖະກິດທີ່ແໜ້ນແຟ້ນກັບອິນເດຍ; ພູຖານເປັນທີ່ຮູ້ຈັກໃນທົ່ວໂລກສຳລັບນະໂຍບາຍ "ລວມຍອດຄວາມສຸກແຫ່ງຊາດ" (Gross National Happiness-GNH) ເຊິ່ງເປັນການວິເຄາະທາງດ້ານເສດຖະກິດທີ່ປະເມີນຄວາມສຸກທາງດ້ານຈິດໃຈຂອງປະຊາກອນນຳດ້ວຍ.

# ພັກກຳອຳນາດບັງກະລາເທດ ຊະນະການເລືອກຕັ້ງ

*ນາຍົກລັດຖະມົນຕີຊີກ ຮາສີນາ (Sheikh Hasina) ສືບຕໍ່ເປັນຜູ້ນຳບັງກະລາເທດຕໍ່ໄປ, ຫຼັງຈາກທີ່ນຳພາພັກລັດຖະບານຊະນະການເລືອກຕັ້ງແຫ່ງຊາດຕາມທີ່ຄາດໄວ້ ຈາກການທີ່ພັກຝ່າຍຄ້ານຕົ້ນຕໍບໍ່ໄດ້ສົ່ງຜູ້ລົງສະໝັກ.*

ສຳນັກຂ່າວ AFP ລາຍງານຈາກນະຄອນຫຼວງດາກາ, ປະເທດບັງກະລາເທດ ວ່າ: ຜົນຢ່າງບໍ່ເປັນທາງການຂອງການເລືອກຕັ້ງທົ່ວໄປໃນບັງກະລາເທດ ເຊິ່ງການລົງຄະແນນສຽງໄດ້ຈັດຂຶ້ນເມື່ອວັນອາທິດທີ 07 ມັງກອນຜ່ານມາ ໂດຍເປັນການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດໃໝ່ 300 ທີ່ນັ່ງ, ປາກົດວ່າພັກສັນນິບາດອະວາມີ (Awami League) ຂອງນາຍົກລັດຖະມົນຕີ ຊີກ ຮາສີນາ ໄດ້ຮັບການເລືອກຕັ້ງຢ່າງໜ້ອຍ 222 ທີ່ນັ່ງ ເຖິງວ່າຫຼຸດລົງ 35 ທີ່ນັ່ງຈາກການເລືອກຕັ້ງຄັ້ງທີ່ຜ່ານມາໃນປີ 2018 ແຕ່ຍັງໄດ້ສຽງສ່ວນຫຼາຍຢ່າງເດັດຂາດ; ພັກຈາຕີຢາ (Jatiya) ເຊິ່ງເປັນໜຶ່ງໃນບັນດາພັກຝ່າຍຄ້ານ ໄດ້ຢ່າງໜ້ອຍ 11 ທີ່ນັ່ງ ຫຼຸດລົງ 15 ທີ່ນັ່ງ, ສ່ວນອີກຢ່າງໜ້ອຍ 62 ທີ່ນັ່ງ ແມ່ນໄດ້ກະຈາຍຢູ່ບັນດາພັກການເມືອງອື່ນໆ.

ຂະນະທີ່ອັດຕາສ່ວນປະຊາຊົນທີ່ອອກມາໃຊ້ສິດເລືອກຕັ້ງມີພຽງແຕ່ 40% ຖືວ່າຕໍ່າຫຼາຍຖ້າທຽບໃສ່ຈຳນວນຜູ້ມາລົງຄະແນນສຽງໃນປີ 2018 ທີ່ຫຼາຍກວ່າ 80% ແລະ ບັນຍາກາດຂອງການເລືອກຕັ້ງແມ່ນຂ້ອນຂ້າງສະຫງົບ, ໂດຍມີທະຫານ ແລະ ຕຳຫຼວດຫຼາຍກວ່າ 800.000 ຄົນ ປະຕິບັດໜ້າທີ່ເພື່ອຮັກສາຄວາມປອດໄພໃນທົ່ວປະເທດ; ແຕ່ກໍມີລາຍງານວ່າມີການປະທ້ວງເລັກໜ້ອຍຢູ່ເມືອງຈິດຕະກອງ (Chittagong) ແລະ ການປິດກັ້ນການເຂົ້າເຖິງເວັບໄຊຂອງບາງສຳນັກຂ່າວໃນວັນເລືອກຕັ້ງ.

ຕະຫຼອດຫຼາຍປີທີ່ຜ່ານມາ ສະຖານະການທາງການເມືອງພາຍໃນບັງກະລາເທດ ມີບັນຍາກາດຂອງຄວາມເຄັ່ງຕຶງ ແລະ ການແບ່ງຝ່າຍລະຫວ່າງຝ່າຍສະໜັບສະໜູນທ່ານ ນາງ ຮາສີນາ ກັບທ່ານ ນາງ ຄາເລດາ ເຊຍ (Khaleda Zia) ອາຍຸ 78 ປີ ອະດີດນາຍົກລັດຖະມົນຕີຍິງຄົນທຳອິດຂອງປະເທດ ທີ່ດຽວນີ້ຖືກກັກຂັງບໍລິເວນຢູ່ໃນເຮືອນໃນຂໍ້ກ່າວຫາສໍ້ລາດບັງຫຼວງ; ໂດຍທ່ານ ນາງ ເຊຍ ເປັນຜູ້ນຳຄົນສຳຄັນຂອງພັກຊາດນິຍົມບັງກະລາເທດ ຫຼື ບີເອັນພີ (Bangladesh Nationalist Party-BNP) ເຊິ່ງເປັນແກນນຳຝ່າຍຄ້ານແລະຂວ້ຳບາດການເລືອກຕັ້ງຄັ້ງນີ້, ໝາຍຄວາມວ່າການເລືອກຕັ້ງຄັ້ງນີ້ ເປັນການມອບໄຊຊະນະຢ່າງງ່າຍດາຍໃຫ້ແກ່ທ່ານ ນາງ ຮາສີນາ ອາຍຸ 76 ປີ ຜູ້ທີ່ໄດ້ກຳອຳນາດຕໍ່ເນື່ອງຕັ້ງແຕ່ປີ 2009.

ພັກສັນນິບາດອະວາມີຂອງທ່ານ ຮາສີນາ, ລູກສາວຂອງທ່ານ ຊີກ ມູຈິບູຣາມັນ (Sheikh Mujibur Rahman) ບິດາແຫ່ງຊາດ ແລະ ປະທານາທິບໍດີຄົນທຳອິດຂອງບັງກະລາເທດ, ປົກຄອງປະເທດເປັນພັກລັດຖະບານ 4 ສະໄໝຕິດຕໍ່ກັນ ຕັ້ງແຕ່ປີ 2009 ເປັນໄລຍະເວລາຍາວນານທີ່ສຸດໃນປະຫວັດສາດການເມືອງຂອງຊາດ.



ຄົນຍ່າງຜ່ານປ້າຍໂຄສະນາຂອງນາຍົກລັດຖະມົນຕີ ຮາສີນາ ຢູ່ຖະໜົນເສັ້ນໜຶ່ງໃນນະຄອນຫຼວງດາກາ

# ລັດຖະບານສິງກະໂປ ສະເໜີຮ່າງກົດໝາຍ ຈຳຄຸກຜູ້ກະທຳຜິດຄະດີຂົ່ມຂືນ "ບໍ່ມີກຳນົດ"



*ສະພາແຫ່ງຊາດສິງກະໂປ ກຽມພິຈາລະນາຮ່າງກົດໝາຍຈຳຄຸກຜູ້ກະທຳຜິດຄະດີຮ້າຍແຮງ ໂດຍສະເພາະການຂົ່ມຂືນ ແລະ ທຳຮ້າຍຮ່າງກາຍຮຸນແຮງ ຢ່າງບໍ່ມີກຳນົດ, ຈົນກວ່າລັດຖະບານຈະເຫັນວ່າເໝາະສົມທີ່ບຸກຄົນດັ່ງກ່າວຈະບໍ່ກັບມາກໍ່ຄະດີອີກ.*

CNA ຊ່ອງຂ່າວຕ່າງປະເທດຂອງສິງກະໂປ ລາຍງານເມື່ອວັນທີ 10 ມັງກອນ 2024 ວ່າ: ກະຊວງຍຸຕິທຳ ແລະ ກະຊວງພາຍໃນ ສິງກະໂປ ອອກຖະແຫຼງການຮ່ວມກ່ຽວກັບການສະເໜີຮ່າງກົດໝາຍເຂົ້າສູ່ການພິຈາລະນາຂອງສະພາແຫ່ງຊາດ ເພື່ອຍົກລະດັບມາດຕະການຄຸ້ມຄອງຄວາມປອດໄພຂອງປະຊາຊົນໃຫ້ຫຼາຍຂຶ້ນ ຈາກຄວາມສ່ຽງທີ່ຈະຖືກທຳຮ້າຍ ໂດຍສະເພາະການຂົ່ມຂືນ, ການລ່ວງລະເມີດທາງເພດ ແລະ ການທຳຮ້າຍຮ່າງກາຍຢ່າງຮຸນແຮງ.

ລັດຖະບານຕ້ອງການສ້າງຄວາມເຊື່ອໝັ້ນໃຫ້ກັບທຸກຝ່າຍວ່າ ຜູ້ກະທຳຜິດໃນຄະດີເຫຼົ່ານີ້ທີ່ພວມຮັບໂທດຢູ່ໃນຄຸກ ຈະບໍ່ກະທຳຜິດຄືນໃໝ່ເມື່ອຖືກປ່ອຍຕົວອອກມາ; ດ້ວຍເຫດນີ້, ລັດຖະບານຈຶ່ງໄດ້ສະເໜີຮ່າງກົດໝາຍທີ່ເອີ້ນວ່າ "ການລົງໂທດເພື່ອປັບປຸງຄວາມປອດໄພສາທາລະນະ" ກຳນົດໃຫ້ຈຳຄຸກຕໍ່າສຸດ 5-20 ປີ ຂຶ້ນກັບການພິຈາລະນາຂອງສານ ສຳລັບຜູ້ກະທຳຜິດໃນຄະດີຮ້າຍແຮງ.

ຂະນະທີ່ຜູ້ກະທຳຜິດທີ່ມີຄວາມສ່ຽງສູງ ແມ່ນຜູ້ກໍ່ເຫດຂົ່ມຂືນ ແລະ ທຳຮ້າຍຮ່າງກາຍຢ່າງໂຫດຮ້າຍທາລຸນ ຈະກັບຄືນມາກໍ່ເຫດທີ່ເປັນອັນຕະລາຍຕໍ່ສັງຄົມ ຈະຕ້ອງສືບຕໍ່ຮັບໂທດໃນຄຸກຢ່າງບໍ່ມີກຳນົດ ໂດຍຈະໄດ້ຮັບການປ່ອຍຕົວກໍຕໍ່ເມື່ອກະຊວງພາຍໃນໄດ້ພິຈາລະນາຢ່າງຮອບຄອບແລ້ວວ່ານັກໂທດຄົນດັ່ງກ່າວຈະບໍ່ກັບຄືນມາກະທຳຄວາມຜິດທີ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມອີກ.

# ນະໂຍບາຍໃຫ້ສັນຊາດ ແລະ ຍົກເວັ້ນວີຊາສໍາລັບຄົນຕ່າງປະເທດ

❖ ວິເສດ ສະແຫວງສຶກສາ

ມື້ນີ້ຂໍຊວນບັນດາທ່ານຜູ້ອ່ານໄປຮູ້ຈັກກັບນະໂຍບາຍຂອງທາງການປະເທດອິດສະຕຣາລີໃນການໃຫ້ສັນຊາດແກ່ຄົນຕ່າງປະເທດທີ່ມີເງື່ອນໄຂ ແລະ ເລື່ອງທີ 2 ແມ່ນກ່ຽວກັບນະໂຍບາຍຂອງທາງການປະເທດເບລາຣຸດໃນການໃຫ້ວີຊາແກ່ຄົນຕ່າງປະເທດເຊັ່ນກັນ.

ທີ່ ອິດສະຕຣາລີ, ເມື່ອສົມທຽບກັບນະໂຍບາຍໃຫ້ສັນຊາດໃນເມື່ອກ່ອນແລ້ວ ຈະເຫັນວ່າ ໃນປັດຈຸບັນ ເງື່ອນໄຂການໃຫ້ສັນຊາດແກ່ຊາວຕ່າງປະເທດນັ້ນ ມີລັກສະນະເຄັ່ງຄັດຮັດກຸມເຂົ້າກວ່າເກົ່າ ໂດຍມີເຫດຜົນວ່າເພື່ອໃຫ້ຄົນຕ່າງປະເທດທີ່ໄດ້ຮັບສັນຊາດອິດສະຕຣາລີ ມີຄວາມສະດວກສະບາຍໃນການເຊື່ອມໂຕເຂົ້າກັບວັດທະນະທໍາ-ສັງຄົມ ແລະ ວິຖີຊີວິດຂອງປະເທດເຈົ້າພາບ. ແຕ່ພ້ອມດຽວກັນນັ້ນ, ກໍມີຫຼັກຖານຢືນຢັນວ່າມາດຕະການກ່ຽວກັບການໃຫ້ສັນຊາດທີ່ໄດ້ຮັບການປັບປຸງໃໝ່ນີ້ ເກີດມາຈາກແຮງກົດດັນຈາກກະແສຕ້ານຄົນເຂົ້າເມືອງຂອງກຸ່ມນັກການເມືອງຂອງອິດສະຕຣາລີ ນັ້ນເອງ. ແຕ່ເມື່ອຟັງຄໍາເຫັນຂອງທ່ານ ມານຄອມ ເທີນບູນ (ນາຍົກລັດຖະມົນຕີອິດສະຕຣາລີ ເມື່ອ 6 ປີຜ່ານມາ ເວລາມີການປັບປຸງລະບຽບການໃຫ້ສັນຊາດ) ແລ້ວ ກໍເຂົ້າໃຈກ່ຽວກັບຈຸດປະສົງ ແລະ ເງື່ອນໄຂໃຫ້ສັນຊາດດັ່ງກ່າວ ທີ່ທ່ານນາຍົກບອກວ່າ ແມ່ນເພື່ອຮັບປະກັນລະບອບການປົກຄອງດ້ວຍກົດໝາຍທີ່ເປັນປະຊາທິປະໄຕ ບົນຫຼັກການເຄົາລົບເຊິ່ງກັນ ແລະ ກັນ, ເພື່ອຄວາມສະເໝີພາບລະຫວ່າງຍິງ-ຊາຍ ເຊິ່ງແມ່ນຄຸນສົມບັດກໍຄືຫຼັກໝັ້ນພື້ນຖານທີ່ພົນລະເມືອງອິດສະຕຣາລີ ຕ້ອງມີປະຈໍາໂຕ. ຜູ້ທີ່ຈະໄດ້ຮັບສັນຊາດອິດສະຕຣາລີ ກໍຕ້ອງມີຄົບເງື່ອນໄຂທີ່ກ່າວມາຂ້າງເທິງນັ້ນ. ສ່ວນເງື່ອນໄຂທາງເຕັກນິກຂອງຜູ້ທີ່ຈະໄດ້ຮັບສັນຊາດນັ້ນປະກອບມີ: ຕ້ອງຮູ້ພາສາອັງກິດໃນລະດັບດີ, ຕ້ອງເປັນຜູ້ທີ່ໄດ້ພັກອາໄສຢູ່ອິດສະຕຣາລີມາແລ້ວ 4 ປີ (ໃນເມື່ອກ່ອນແມ່ນ 1 ປີເທົ່ານັ້ນ) ນອກນັ້ນຜູ້ທີ່ຮ້ອງຂໍສັນຊາດຍັງຕ້ອງໄດ້ແຈ້ງຜົນງານການເຄື່ອນໄຫວປະກອບອາຊີບຂອງຕົນ ກໍຄືສະພາບການເຊື່ອມໂຕຂອງຕົນເຂົ້າກັບສັງຄົມອິດສະຕຣາລີອີກດ້ວຍ. ສະຫຼຸບຄວາມແລ້ວບັນດາຫຼັກການໃໝ່ທີ່ເປັນເງື່ອນໄຂສໍາລັບຂໍສັນຊາດນັ້ນ ແມ່ນເພື່ອໃຫ້ຊາວຕ່າງປະເທດທີ່ເປັນເປົ້າໝາຍມີຄວາມຈົງຮັກພັກດີ ແລະ ມີພັນທະຕໍ່ຄ່ານິຍົມຂອງອິດສະຕຣາລີ.

ໃນຫົວຂໍ້ທີ່ກ່ຽວກັບນະໂຍບາຍຍົກເວັ້ນວີຊາເຂົ້າປະເທດນັ້ນ, ເບລາຣຸດ ເປັນອີກປະເທດໜຶ່ງທີ່ນໍາໃຊ້ລະບົບນີ້ ເພື່ອຄວາມສະດວກສະບາຍໃນການເຂົ້າ-ອອກປະເທດ ແນໃສ່ດຶງດູດນັກທ່ອງທ່ຽວ-ນັກລົງທຶນຕ່າງປະເທດ. ນະໂຍບາຍຍົກເວັ້ນວີຊາສະບັບໃໝ່ນີ້ ໄດ້ປະກາດໃຊ້ມາແຕ່ເດືອນກໍລະກົດ ປີ 2018 ເຊິ່ງໄດ້ກໍານົດຫຼັກການທີ່ໜ້າສົນໃຈໄວ້ດັ່ງນີ້: ໄລຍະການຍົກເວັ້ນວີຊານັ້ນ ໄດ້ປ່ຽນຈາກ 5 ວັນ ມາເປັນ 30 ວັນ ສໍາລັບຄົນຕ່າງປະເທດທີ່ເດີນທາງເຂົ້າປະເທດເບລາຣຸດ ຜ່ານສະໜາມບິນສາກົນຂອງນະຄອນຫຼວງມິນ (Minsk). ເງື່ອນໄຂຂອງຄົນຕ່າງປະເທດທີ່ຈະໄດ້ຮັບການຍົກເວັ້ນວີຊານັ້ນ ຄືຕ້ອງມີໜັງສືຜ່ານແດນທີ່ຖືກຕ້ອງ, ມີປະກັນໄພດ້ານສຸຂະພາບ ແລະ ມີເງິນຕິດໂຕເພື່ອໃຊ້ຈ່າຍປະຈໍາວັນ ວັນລະ 25 ໂດລາສະຫະລັດ (ຖ້າຢູ່ເຕັມ 30 ວັນ ກໍຕ້ອງມີເງິນໃຊ້ຈ່າຍປະຈໍາວັນທັງໝົດ 750 ໂດລາສະຫະລັດ). ຖ້າຄົນຕ່າງປະເທດທີ່ຕ້ອງການຢູ່ພຽງ 5 ວັນເຮັດວຽກ (ຈັນເຖິງສຸກ) ກໍຕ້ອງໄດ້ໄປຂຶ້ນທະບຽນກັບອໍານາດການປົກຄອງທ້ອງຖິ່ນບ່ອນຕົນພັກເຊົາ. ນະໂຍບາຍຍົກເວັ້ນວີຊາຂອງປະເທດເບລາຣຸດໃນເວລານັ້ນ ໄດ້ກວມເອົາ 80 ປະເທດ. ນະໂຍບາຍສະບັບເກົ່າປະກາດໃຊ້ໃນເດືອນກໍລະກົດ 2017 ເຊິ່ງອະນຸຍາດຍົກເວັ້ນວີຊາໄດ້ພຽງ 5 ວັນ, ຕໍ່ມາ ເດືອນກໍລະກົດ 2018 ຈຶ່ງໄດ້ຍືດໄລຍະຍົກເວັ້ນເປັນ 30 ວັນ.




## ຢຸດບໍລິການແລ້ວ

*# ບ່າວກະບື*

ຊຽງເລີຍ ແຕ່ງດອງກັບສາວພະນັກງານເຮັດວຽກຢູ່ສູນຕໍ່ໂທລະສັບ. ໃນຄືນທໍາອິດ, ຍ້ອນອິດເມື່ອຍຫຼາຍ, ພໍແຕ່ລົ້ມຫົວຕຽງ, ນາງກໍຫຼັບໂລດ. ເມື່ອຊຽງເລີຍພະຍາຍາມປຸກນາງເພື່ອບອກວ່າຮອດຍາມດື່ມສຸກກັນແລ້ວ, ນາງຕອບສຽງພຶງບອບອອກມາວ່າ: "ຂໍໂທດ ເລກໝາຍທີ່ທ່ານເອີ້ນ ຢຸດບໍລິການແຕ່ດົນແລ້ວ!".

## NO LONGER AVAILABLE

*# BAOKBU*

Xieng Leuy married a girl who worked in the telephone exchange center. On the first night, being tired, the wife fell asleep as soon as she got into bed. When Xieng Leuy tried to wake her saying it was time to have fun, she sleepily replied,

"Sorry but this service is no longer available on this number".

## ໄຊຍະບູລີ...

(ຕໍ່ຈາກໜ້າ 1)

(ສພຊ) ພິທີໂຮມຊຸມນຸມສະເຫຼີມສະຫຼອງວັນສ້າງຕັ້ງກອງທັບປະຊາຊົນລາວຄົບຮອບ 75 ປີ ຢູ່ແຂວງໄຊຍະບູລີ ໄດ້ຈັດຂຶ້ນໃນວັນທີ 19 ມັງກອນ 2024 ທີ່ຫໍປະຊຸມໃຫຍ່ຂອງແຂວງເຊິ່ງໄດ້ເລີ່ມຕົ້ນດ້ວຍການສະແດງສິລະປະ, ເຄົາລົບທຸງຊາດ, ອ່ານສານອວຍພອນ ໂດຍການເຂົ້າຮ່ວມຂອງສະຫາຍ ພົທ. ສຸວອນ ເລືອງບຸນມີ ກໍາມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດປະຈໍາເຂດເລືອກຕັ້ງທີ 7; ສະຫາຍ ພົງສະຫວັນ ສິດທະວົງ ກໍາມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງໆໄຊຍະບູລີ; ສະຫາຍ ພົຈວ. ກູດ ພົມມາ ຫົວໜ້າການທະຫານກອງບັນຊາການທະຫານແຂວງໄຊຍະບູລີ ພ້ອມດ້ວຍບັນດາສະຫາຍຄະນະປະຈໍາ-ກໍາມະການພັກແຂວງ, ເຈົ້າເມືອງ, ຫົວໜ້າພະແນກການອ້ອມຂ້າງແຂວງ, ບັນດາສະຫາຍໃນຄະນະພັກ-ຄະນະບັນຊາກອງບັນຊາການທະຫານແຂວງ, ກອງພົນທີ2, ກອງບັນຊາການ ປກສ ແຂວງ, ອະດີດການນໍາຂອງແຂວງ, ພະນັກງານ, ທະຫານ-ຕໍາຫຼວດ, ພະນັກງານປະຕິວັດອາວຸໂສບໍານານ, ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ ຕະຫຼອດຮອດພາກສ່ວນຕ່າງໆພາຍໃນແຂວງເຂົ້າຮ່ວມຢ່າງຫຼວງຫຼາຍ.

ໃນພິທີ, ສະຫາຍ ພົຈວ. ກູດ ພົມມາ ໄດ້ຂຶ້ນອ່ານຄໍາສັ່ງປະຈໍາວັນຂອງກະຊວງປ້ອງກັນປະເທດ ຫຼັງຈາກນັ້ນ ສະຫາຍ ພົງສະຫວັນ ສິດທະວົງ ກໍໄດ້ຂຶ້ນກ່າວປາໄສ ໂດຍໄດ້ເລົ່າຄືນເຖິງມູນເຊື້ອຕົ້ນກໍາເນີດ, ການເຕີບໃຫຍ່ຂະຫຍາຍຕົວຂອງກອງທັບປະຊາຊົນລາວ ກໍຄືປະຫວັດມູນເຊື້ອແຫ່ງການເຕີບໃຫຍ່ຂອງກໍາລັງປະກອບອາວຸດກອງທັບ ທີ່ໄດ້ພ້ອມກັບປະຊາຊົນລາວບັນດາເຜົ່າຕໍ່ສູ້ກູ້ຊາດໃນເມື່ອກ່ອນ ກໍຄືການປະຕິບັດ 2 ໜ້າທີ່ຍຸດທະສາດ ປົກປັກຮັກສາ ແລະ ສ້າງ ສາພັດທະນາປະເທດຊາດຢ່າງສົມກຽດແລະມີໄຊຕະຫຼອດ 75 ປີຜ່ານມາ, ໄດ້ຕັ້ງໜ້າເສີມຂະຫຍາຍມູນເຊື້ອອັນສະຫງ່າງາມອົງອາດກ້າຫານຂອງກອງທັບປະຊາຊົນລາວຕາມຄໍາຂວັນທີ່ວ່າ: ບໍລິສຸດຕໍ່ຊາດ, ຮັບໃຊ້ປະຊາຊົນຢ່າງສຸດໃຈ, ເສີມຂະຫຍາຍທາດແທ້ມູນເຊື້ອປະຕິວັດ, ເຮັດສໍາເລັດທຸກໜ້າທີ່ຂອງກອງທັບເຮົາ. ຕະຫຼອດ 75 ປີ ກອງທັບໄດ້ອອກ ແຮງປັບປຸງກໍ່ສ້າງກໍາລັງປະກອບອາວຸດຂອງຕົນໃຫ້ເຕີບໃຫຍ່ເຂັ້ມແຂງ ແລະ ກ້າວຂຶ້ນເປັນກອງທັບທີ່ມີແບບແຜນທັນສະໄໝ, ເປັນເຈົ້າການແກ້ໄຂທຸກສະພາບການອັນບໍ່ດີທີ່ເກີດຂຶ້ນເພື່ອເຮັດໃຫ້ປະເທດຊາດມີຄວາມສະຫງົບ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ; ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນໃນວັນທີ 2 ທັນວາ 1975 ກອງທັບປະຊາຊົນລາວໄດ້ເອົາໃຈໃສ່ຈັດຕັ້ງພະນັກງານຫັນລົງເຮັດວຽກກໍ່ສ້າງຮາກຖານການເມືອງ, ຊຸກຍູ້ປຸກລະ ດົມໃຫ້ປະຊາຊົນເຂົ້າຮ່ວມວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານຂອງພັກຕິດພັນກັບການພັດທະນາເສດຖະກິດ-ສັງຄົມ ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ; ເພີ່ມທະວີການນໍາພາຂອງພັກໃຫ້ເປັນແກນນໍາທຸກຂົງເຂດວຽກງານ, ສຶກສາອົບຮົມການເມືອງແນວຄິດໃຫ້ໜັກແໜ້ນ ເຂັ້ມແຂງ ເລິກເຊິ່ງ; ສຸມໃສ່ຈັດຕັ້ງບໍາລຸງແລະກໍ່ສ້າງພະນັກງານຂັ້ນນໍາພາ-ບັນຊາ ແລະພະນັກງານວິຊາການຕ່າງໆ ໃນແຕ່ລະຂັ້ນແຕ່ລະກົມກອງ ໃຫ້ມີຄວາມຮູ້, ຄວາມສາມາດ, ມີຫົວຄິດປະດິດສ້າງ ໃຫ້ສົມຄູ່ກັບຄວາມຮຽກຮ້ອງຕ້ອງການ ໂດຍຕິດພັນກັບໜ້າທີ່ການເມືອງຂອງກອງທັບ ໄປພ້ອມກັບການປັບປຸງກໍ່ສ້າງກົມກອງໃຫ້ປອດໃສ ເຂັ້ມແຂງ ແລະ ໜັກແໜ້ນ, ເອົາໃຈໃສ່ນໍາພາ-ຊີ້ນໍາກົມກອງຊຸດຄົ້ນທ່າແຮງບົ່ມຊ້ອນຂອງຕົນເພື່ອຊອກຫາແຫຼ່ງລາຍຮັບໃຫ້ກົມກອງ; ພ້ອມກັນນັ້ນ, ກໍເປັນການກໍ່ສ້າງພື້ນຖານໂຄງລ່າງທາງດ້ານເສດຖະກິດ-ສັງຄົມຢ່າງມີຈຸດສຸມເພື່ອເປັນກໍາລັງແຮງຊຸກດັນໃນການພັດທະນາກອງທັບ ແລະ ປະເທດຊາດ.

**(ນາງ ກຸກກິກ ບຸດດາໄຊ)**

## ສະເຕັບສ໌...

(ຕໍ່ຈາກໜ້າ 2)

ເພື່ອເຮັດໃຫ້ກອງປະຊຸມຄັ້ງນີ້ ໄດ້ຮັບຜົນສໍາເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້, ທ່ານຮອງເລຂາທິການສະພາແຫ່ງຊາດ ຍັງໄດ້ສະເໜີໃຫ້ບັນດາທ່ານຜູ້ເຂົ້າຮ່ວມ ຈົ່ງເອົາໃຈໃສ່ໃນການຕິດຕາມການລາຍງານ, ປະກອບຄໍາເຫັນແລະຖອດຖອນບົດຮຽນກ່ຽວກັບຜົນການຈັດຕັ້ງປະຕິບັດໂຄງການໃນໄລຍະຜ່ານມາ ພ້ອມທັງສົນທະນາແລກປ່ຽນກ່ຽວກັບການວາງແຜນໂຄງການໃນຕໍ່ໜ້າ ເພື່ອຮັບປະກັນປະສິດທິພາບ ແລະ ປະສິດທິຜົນຂອງການຈັດຕັ້ງປະຕິບັດເວົ້າລວມ, ເວົ້າສະເພາະແມ່ນການສະໜັບສະໜູນການປະຕິບັດພາລະບົດບາດຂອງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງເພື່ອນໍາຜົນປະໂຫຍດອັນສູງສຸດມາໃຫ້ແກ່ປະຊາຊົນ ໂດຍຜ່ານ 3 ພາລະບົດບາດ ກໍຄືພາລະບົດບາດດ້ານນິຕິບັນຍັດ, ການຕົກລົງບັນຫາສໍາຄັນພື້ນຖານຂອງປະເທດຊາດ ແລະ ການຕິດຕາມກວດກາ.

ກອງປະຊຸມໄດ້ຮັບຟັງການສະເໜີໂຄງຮ່າງການຈັດຕັ້ງ ແລະ ພາລະບົດບາດຂອງຄະນະຊີ້ນໍາໂຄງການ; ຜົນສໍາເລັດການຈັດຕັ້ງປະຕິບັດແຜນວຽກປະຈໍາປີ 2023; ລາຍງານວຽກງານປິ່ນອ້ອມ ເປັນຕົ້ນລາຍງານການເງິນ, ແຜນບຸກຄະລາກອນ ແລະ ບໍລິສັດດ້ານການຈັດການ; ຮ່າງແຜນວຽກປະຈໍາປີ 2024 ແລະ ແຜນຕົວຊີ້ວັດໃນແຜນວຽກປະຈໍາປີ 2024. ຈາກນັ້ນຜູ້ເຂົ້າຮ່ວມໄດ້ຜັດປ່ຽນກັນປະກອບຄໍາຄິດຄໍາເຫັນ, ສົນທະນາແລກປ່ຽນ ແລະ ຖອດຖອນບົດຮຽນເຊິ່ງກັນ ແລະກັນ ຕໍ່ບົດຕ່າງໆທີ່ນໍາມາສະເໜີໃນກອງປະຊຸມຄັ້ງນີ້.

**(ສອນສັກ ວັນວິໄຊ)**

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນໍາ**
ທ່ານ ສິງຄໍາ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄໍາຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອໍາພັນ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ກົງທະບູຄໍາ ພິພັດເສລີ
ທ່ານ ນາງ ສຸພາວັນ ທອມສະນິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ